# ວາລະສານຂ່າວ ບີຄວາ

ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານ
ໃຫ້ແກ່ເດັກຍິງ ແລະ ເດັກຊາຍໃນ ສປປ ລາວ

ເດືອນກັນຍາ 2018 | ສະບັບທີ 3




1-2 ຂໍ້ຄວາມຕ້ອນຮັບ

3-4 ເອກອັກຄະລັດຖະທູດອິດສະຕຣາລີຢ້ຽມຢາມແຂວງສະຫວັນນະເຂດ

5-6 ຫຼັກສູດຊັ້ນປະຖົມສຶກສາສະບັບໃໝ່ ຈະຖືກນຳໃຊ້ໃນຕົ້ນເດືອນກັນຍາ 2019

7-8 ແຜນງານການພັດທະນາວິຊາຊີບຄູ ເພື່ອປັບປຸງຜົນການຮຽນຂອງນັກຮຽນ

9 ນັກຮຽນຄູທ້ອງຖິ່ນຊຸດທຳອິດ ຈະກັບເມືອສອນຢູ່ໂຮງຮຽນໃນບ້ານຂອງຕົນໃນໄວໆນີ້

10 ແຜນງານບີຄວາຊ່ວຍເຫຼືອຊຸມຊົນ ໃນການປຸກສ້າງຫ້ອງຮຽນໃໝ່

11- 12 ການສຶກສາມີບົດບາດສຳຄັນ ໃນການສົ່ງເສີມບົດບາດແມ່ຍິງ

13-14 ມາຮູ້ຈັກກັບ ນາງ ແກ່ນຄຳ ຢາງ, ຜູ້ທີ່ມີແຮງຈູງໃຈສູງໃນການສະໜັບສະໜູນການສຶກສາໃນຊຸມຊົນ

15-16 ການສົ່ງເສີມໃຫ້ເດັກພິການໄດ້ເຂົ້າໂຮງຮຽນ

17-18 ເບື້ອງຫຼັງການຖ່າຍທຳຮູບເງົາກາຕູນດິນປັ້ນ


**ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ບີຄວາ)**

Australian Aid

European Union

# ຂໍ້ຄວາມຕ້ອນຮັບ

ພວກເຮົາມີຄວາມຍິນດີທີ່ຈະແບ່ງປັນວາລະສານຂ່າວ ຈາກແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ສະບັບລ່າສຸດ.

ລັດຖະບານແຫ່ງ ສປປ ລາວ ໄດ້ຍົກສູງບຸລິມະສິດໃນວຽກງານຂະແໜງການສຶກສາ ແລະ ໃຫ້ການພັດທະນາການສຶກສາເປັນກຸນແຈສໍາຄັນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອໃຫ້ ສປປ ລາວ ມີຄວາມສາມາດດ້ານການແຂ່ງຂັນກັບເສດຖະກິດອາຊຽນ ແລະ ຫັນເປັນປະເທດອຸດສາຫະກໍາ ແລະ ມີຄວາມທັນສະໄໝ.

ແຜນງານບີຄວາ ໄດ້ຖືກອອກແບບໃຫ້ຊ່ວຍສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ (ສສກ) ໃນການແກ້ໄຂບັນຫາທ້າທາຍດ້ານການສຶກສາຂັ້ນພື້ນຖານໃນ ສປປ ລາວ ແລະ ສອດຄ່ອງກັບແຜນພັດທະນາຂະແໜງສຶກສາແຫ່ງຊາດ 2016-20. ແຜນງານບີຄວາ ເປັນແຜນງານທີ່ມີເອກະລັກທີ່ຮ່ວມມືທາງດ້ານການສຶກສາລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ, ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ (USAID) ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

*"ແຜນງານບີຄວາ ກໍ່ແມ່ນແຜນງານໜຶ່ງ ທີ່ໄດ້ໃຫ້ການສະໜັບສະໜູນ ໃນການຈັດຕັ້ງປະຕິບັດ ໂດຍສຸມໃສ່ວຽກງານທີ່ເປັນບຸລິມະສິດ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະໄດ້ເນັ້ນໃສ່ວຽກງານພັດທະນາຫຼັກສູດຊັ້ນປະຖົມສຶກສາ, ວຽກງານການກໍ່ສ້າງ ແລະ ບໍາລຸງຄູ ແລະ ວຽກງານອື່ນໆຕື່ມອີກ ຊຶ່ງເຫັນໄດ້ວ່າການຈັດຕັ້ງປະຕິບັດ ແມ່ນມີຜົນສໍາເລັດ ແລະ ມີຄວາມຄືບໜ້າ ເປັນໜ້າເພິ່ງພໍໃຈ. ສິ່ງດັ່ງກ່າວແມ່ນມີຄວາມສອດຄ່ອງ ແລະ ໄປຕາມແຜນທີ່ເປັນບຸລິມະສິດຂອງແຜນພັດທະນາວຽກງານຂະແໜງການສຶກສາ ແລະ ກິລາ ໃນແຕ່ລະໄລຍະ. ໃນນາມກະຊວງສຶກສາທິການ ແລະ ກິລາ ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງ ຕໍ່ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ ທີ່ໄດ້ໃຫ້ການສະໜັບສະໜູນ ໃນການຈັດຕັ້ງປະຕິບັດແຜນງານບີຄວາ, ຊຶ່ງເປັນແຜນງານຂະໜາດໃຫຍ່, ຂ້າພະເຈົ້າຂໍໃຫ້ຄໍາໝັ້ນສັນຍາຕໍ່ທ່ານວ່າ ຈະໃຫ້ການສະໜັບສະໜູນ ແລະ ນໍາໃຊ້ການຊ່ວຍເຫຼືອດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງຕະຫຼອດໄປ ".*

**ທ່ານ ປອ ບຸນປັນ ໄຊມຸນຕຣີ, ຫົວໜ້າກົມແຜນການ, ສສກ.**





*"ດັ່ງທີ່ພວກເຮົາຮູ້ແລ້ວວ່າ ການປັບປຸງຜົນການສຶກສາແມ່ນຕ້ອງໄດ້ມີວິທີການທີ່ຮອບດ້ານ ເຊັ່ນ ສື່ການຮຽນການສອນ, ພື້ນຖານໂຄງລ່າງ, ການເງິນຂອງພາກລັດ, ການນໍາພາ ແລະ ການບໍລິຫານໂຮງຮຽນ, ແລະ ການມີສ່ວນຮ່ວມຂອງຊຸມຊົນ. ແຕ່ອົງປະກອບພື້ນຖານທີ່ສຸດຂອງການຮຽນແມ່ນຄູ. ຍ້ອນແນວນັ້ນ ພວກເຮົາຈຶ່ງມີຄວາມພາກພູມໃຈໃນການສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ໃນການປັບປຸງທັກສະການສອນ ແລະ ວິທີການສອນ, ລວມທັງຫຼັກສູດໃໝ່ ".*

**ທ່ານ ນາງ ເຄທີ ສະມິດທ໌, ເລຂາເອກ, ສະຖານທູດອົດສະຕຣາລີ ປະຈໍາ ສປປ ລາວ.**



*"ຄຸນນະພາບຂອງຄູ ແມ່ນໜຶ່ງໃນຫຼາຍໆປັດໄຈ ທີ່ສໍາຄັນທີ່ສຸດ ໃນການປະກອບສ່ວນໃຫ້ແກ່ຜົນການຮຽນ. ພວກເຮົາມີຄວາມຍິນດີ ທີ່ໄດ້ເປັນຄູ່ຮ່ວມງານກັບກະຊວງສຶກສາທິການ ແລະ ກິລາ ແລະ ອົດສະຕຣາລີ ໃນການສະໜັບສະໜູນ ການພັດທະນາວິຊາຊີບຄູ ໃຫ້ແກ່ຄູຝຶກຄູ, ແລະ ການຝຶກອົບຮົມນັກຮຽນຄູຊົນເຜົ່າທີ່ຈະຖືກສົ່ງໄປສອນຢູ່ໝູ່ບ້ານຫ່າງໄກສອນຫຼີກ ".*

**ທ່ານ ບຣາຍອັນ ຟຣນາຣີ, ຫົວໜ້າຝ່າຍການຮ່ວມມື, ສະຫະພາບເອີຣົບ ປະຈໍາ ສປປ ລາວ.**



*“ເປົ້າໝາຍຂອງແຜນງານບີຄວາ ແມ່ນຂະຫຍາຍໂອກາດໃຫ້ເດັກຍິງ ແລະ ເດັກຊາຍ ໃນເກນອາຍຸຮຽນຊັ້ນປະຖົມ ໂດຍສະເພາະຜູ້ທີ່ດ້ອຍໂອກາດຈຳນວນຫຼາຍຂຶ້ນ ສາມາດອ່ານອອກຂຽນໄດ້, ຄິດໄລ່ເລກເປັນ ແລະ ມີທັກສະຊີວິດທີ່ຈຳເປັນອື່ນໆ ເຊິ່ງສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ສິ່ງດັ່ງກ່າວນີ້ ຮຽກຮ້ອງໃຫ້ມີການປັບປຸງຫຼັກສູດ, ການປ່ຽນແປງການສອນ ແລະ ສຸມໃສ່ການຕິດຕາມການປ່ຽນແປງດັ່ງກ່າວ ໃນລະດັບຫ້ອງຮຽນ. ພວກເຮົາຢາກເຫັນຄູທີ່ມີຄວາມຊຳນານງານ ແລະ ມີທັດສະນະທີ່ດີ ຫ້າວຫັນໃນການສິດສອນ ແລະ ຊຸກຍູ້ໃຫ້ເດັກນ້ອຍຮຽນຮູ້ ແລະ ຫວັງຢາກເຫັນຜູ້ບໍລິຫານໂຮງຮຽນ, ຊຸມຊົນ ແລະ ກະຊວງສຶກສາທິການ ແລະ ກິລາ ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ສາມາດໃຫ້ຄວາມຊ່ວຍເຫຼືອທີ່ຈຳເປັນແກ່ຄູໄດ້ ”.*

**ທ່ານ ນາງ ຊິນເວຍ ບິດເຕີ້, ຫົວໜ້າແຜນງານບີຄວາ.**

ວິທີການຂອງແຜນງານບີຄວາ ສຸມໃສ່ການຮ່ວມມື ແລະ ຮ່ວມງານກັບລັດຖະບານ ແລະ ກະຊວງ ໃນຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ແລະ ຂັ້ນບ້ານ ຮ່ວມກັບຄູ ແລະ ນັກຮຽນ, ຄູ່ຮ່ວມງານ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ. ຈາກສິ່ງດັ່ງກ່າວ, ພວກເຮົາຈຶ່ງຢາກແບ່ງປັນເລື່ອງລາວ ແລະ ການອັບເດດຕ່າງໆ ຈາກບັນດາຄູ່ຮ່ວມງານ ຈາກຂັ້ນສູນກາງ ໄປເຖິງຂັ້ນທ້ອງຖິ່ນ.



**ການຢ້ຽມຢາມຂອງຕາງໜ້າກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ສະຖານທູດອົດສະຕຣາລີ, ສະຫະພາບເອີຣົບ ແລະ ທີ່ປຶກສາແຜນງານບີຄວາ ຢູ່ແຂວງຫຼວງນ້ຳທາ ແລະ ແຂວງອຸດົມໄຊ ໃນການຕິດຕາມ ແລະ ສົ່ງເສີມການສຶກສາ ໃນເດືອນເມສາ 2018.**

# ເອກອັກຄະລັດຖະທູດອົດສະຕຣາລີຢ້ຽມຢາມ ແຂວງສະຫວັນນະເຂດ

ເອກອັກຄະລັດຖະທູດອົດສະຕຣາລີປະຈຳລາວຄົນໃໝ່, ທ່ານ ຈ໋ອງ-ເປີນາດ ຄາຣາສ໌ໂກ ເລືອກທີ່ຈະໄປຢ້ຽມຢາມແຂວງສະຫວັນນະເຂດ ໃນການເດີນທາງອອກນອກນະຄອນຫຼວງວຽງຈັນຄັ້ງທຳອິດ ແລະ ມີຄວາມຍິນດີທີ່ໄດ້ພົບເຫັນດ້ວຍຕົນເອງວ່າແຜນງານບີຄວາ ຊ່ວຍເຫຼືອໃຫ້ເດັກດ້ອຍໂອກາດສາມາດເຂົ້າເຖິງການສຶກສາໄດ້ຄືແນວໃດ.

ພາຍຫຼັງການໂອ້ລົມກັບ ພະນະທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງ ແຂວງສະຫວັນນະເຂດ, ກ່ຽວກັບ ຄວາມຄືບໜ້າຂອງວຽກງານການພັດທະນາເສດຖະກິດ, ສັງຄົມ ແລະ ການສຶກສາຂອງແຂວງ ແລະ ການປະຊຸມກັບ ທ່ານ ນາງ ຫຼົງທອງ ແສງຕາວັນ, ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງສະຫວັນນະເຂດ ເພື່ອປຶກສາຫາລືກ່ຽວກັບວິທີການທີ່ອົດສະຕຣາລີຈະສາມາດສະໜັບສະໜູນບຸລິມະສິດ ດ້ານການສຶກສາຂອງແຂວງ ແລະ ເມືອງໃຫ້ດີຂຶ້ນກວ່າເກົ່າ, ທ່ານເອກອັກຄະລັດຖະທູດເລີ່ມຕົ້ນການຢ້ຽມຢາມທ້ອງຖິ່ນ ທີ່ວິທະຍາໄລຄູສະຫວັນນະເຂດ.

ທ່ານເອກອັກຄະລັດຖະທູດໄດ້ພົບກັບນັກຮຽນ ແລະ ເຂົາເຈົ້າມີຄວາມຕື່ນເຕັ້ນ ທີ່ຫໍພັກ, ຫ້ອງນ້ຳໃໝ່, ແລະ ຫ້ອງອາບນ້ຳຢູ່ວິທະຍາໄລຂອງພວກເຂົາຈະຖືກເປີດນຳໃຊ້ຢ່າງເປັນເປັນທາງການໂດຍທ່ານທູດ.

ຫຼັງຈາກນັ້ນ, ພະນະທ່ານ ຄຳພູນ ຕຸໄພທູນ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດ; ທ່ານ ເກດ ພົນລັກ, ວ່າການຫົວໜ້າກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ; ແລະ ທ່ານເອກອັກຄະລັດຖະທູດ ໄດ້ຮ່ວມເປັນປະທານພິທີເປີດການກໍ່ສ້າງພື້ນຖານໂຄງລ່າງໂຮງຮຽນໃນເຂດພາກໃຕ້ຢ່າງເປັນທາງການ. ພິທີດັ່ງກ່າວໄດ້ຈັດຂຶ້ນທີ່ໂຮງຮຽນປະຖົມບ້ານເທີ້ມນ້ອຍ, ເມືອງພະລານໄຊ. ຄະນະນຳທີ່ເຂົ້າຮ່ວມ ໄດ້ເຈາະພື້ນ ແລະ ຖອກຊີມັງສຳລັບການກໍ່ສ້າງຫ້ອງຮຽນໃໝ່. ນັກຮຽນຄູຊົນເຜົ່າຈຳນວນ 11 ຄົນ ທີ່ຈະໄປສອນຢູ່ບ້ານຂອງຕົນໃນເມືອງນີ້ ໃນເດືອນກັນຍາ 2018 ກໍ່ໄດ້ເຂົ້າຮ່ວມພິທີດັ່ງກ່າວດ້ວຍຄວາມພາກພູມໃຈ.

ທ່ານເອກອັກຄະລັດຖະທູດ ຄາຣາສ໌ໂກ ໄດ້ກ່າວວ່າ: "*ອົດສະຕຣາລີໄດ້ສະໜັບສະໜູນການສຶກສາ ໃນ ສປປ ລາວ ເປັນເວລາດົນນານມາແລ້ວ. ພວກເຮົາມີເປົ້າໝາຍອັນດຽວກັນ ໃນການໃຫ້ໂອກາດທາງດ້ານການສຶກສາທີ່ດີແກ່ເດັກນ້ອຍ. ບໍ່ມີສິ່ງໃດທີ່ຈະສຳຄັນກວ່າການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ* ".

ການມີໂຮງຮຽນທີ່ມີອຸປະກອນພຽງພໍແມ່ນເປັນໜຶ່ງໃນສາມຜົນໄດ້ຮັບຄາດຄະເນຂອງແຜນງານບີຄວາ. ໂຮງຮຽນທີ່ນັກຮຽນຄູຊົນເຜົ່າ ຈະໄປສອນປະຈຳຈະໄດ້ຮັບການປັບປຸງພື້ນຖານໂຄງລ່າງ.





**ທ່ານ ຈ໋ອງ-ເບີນາດ ຄາຣາສ໌ໂກ, ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ແລະ ທ່ານ ຄຳພູນ ຕຸໄພທູນ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດໂອ້ລົມກັບນັກຮຽນ ທີ່ວິທະຍາໄລຄູ.**

ນັກຮຽນຄູ 197 ຄົນ, ຊຶ່ງມີເພດຍິງ 132 ຄົນ ໄດ້ຮັບການສະໜັບສະໜູນໃຫ້ເຂົ້າຮຽນ ທີ່ວິທະຍາໄລຄູສະຫວັນນະເຂດ.

ໃນຈຳນວນນັກຮຽນຄູ 197 ຄົນ, 123 ຄົນ ຈະຖືກສົ່ງໄປສອນຢູ່ເມືອງເກີດຂອງຕົນຢູ່ແຂວງສະຫວັນນະເຂດ, ແລະ 74 ຄົນ ຢູ່ແຂວງຄຳມ່ວນ.

ຄູຝຶກຄູ 5 ທ່ານ ຈາກວິທະຍາໄລຄູສະຫວັນນະເຂດ ໄດ້ຮັບທຶນການສຶກສາປະລິນຍາໂທ ແລະ ຄູຝຶກຄູ 2 ທ່ານ ໄດ້ຮັບການຄັດເລືອກສຳລັບທຶນການສຶກສາປະລິນຍາເອກ.

12.4 ຕື້ກີບ ໄດ້ຖືກລົງທຶນໃສ່ພື້ນຖານໂຄງລ່າງ.

ຢູ່ແຂວງສະຫວັນນະເຂດ, ບີຄວາກໍຍັງໄດ້ເຮັດວຽກຢ່າງໃກ້ຊິດກັບອຳນາດການປົກຄອງທ້ອງຖິ່ນ ໃນການປັບປຸງການບໍລິຫານການເງິນ ແລະ ເພີ່ມການຊ່ວຍເຫຼືອຄູ. ຫ້ອງການສຶກສາທິການ ແລະ ກິລາເມືອງພະລານໄຊ ແລະ ເມືອງນອງ ໄດ້ຮັບທຶນສະໜັບສະໜູນເພື່ອເພີ່ມການຢ້ຽມຢາມ ແລະ ຕິດຕາມບັນດາໂຮງຮຽນ ແລະ ບ້ານຕ່າງໆ, ເພື່ອໃຫ້ການຊ່ວຍເຫຼືອ ແລະ ຄຳແນະນຳໃນການປະຕິບັດວຽກງານໃຫ້ແກ່ຄູ, ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ. ພະນັກງານການເງິນຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ຮັບການຝຶກອົບຮົມກ່ຽວກັບໂປແກຼມເອັກເຊລຂັ້ນພື້ນຖານ ເພື່ອປັບປຸງຂັ້ນຕອນຕ່າງໆ ແລະ ປະສິດທິພາບໃນການເຮັດວຽກ.



**ການເປີດວຽກງານກໍ່ສ້າງພື້ນຖານໂຄງລ່າງໃນແຂວງສະຫວັນນະເຂດ ໃນພິທີຂຸດພື້ນປະຖົມມະເລີກ ທີ່ໂຮງຮຽນປະຖົມບ້ານເທົ້ມນ້ອຍ, ເມືອງພະລານໄຊ.**

# ຫຼັກສູດຊັ້ນປະຖົມສຶກສາສະບັບໃໝ່ ຈະຖືກນຳໃຊ້ໃນຕົ້ນເດືອນກັນຍາ 2019




**ທ່ານ ແອນເດຣສ ເຊີບຣູກ ແລະ ທ່ານ ຣສ. ປອ. ຄຳຜາຍ ສີສະຫວັນ ຮ່ວມເປັນປະທານໃນກອງປະຊຸມຄະນະຊີ້ນຳວຽກງານການປັບປຸງຫຼັກສູດຊັ້ນປະຖົມ.**

ນັບແຕ່ປີ 2015, ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ປັບປຸງຫຼັກສູດຊັ້ນປະຖົມສຶກສາ ຂອງ ສ ປປ ລາວ, ທີ່ຈະຖືກນຳໃຊ້ຕາມລຳດັບ ເລີ່ມຕົ້ນຈາກ ຊັ້ນ ປ. 1 ໃນເດືອນກັນຍາ 2019.

ຫຼັກສູດໃໝ່ນີ້ແມ່ນຈັດລຽງຕາມຫົວເລື່ອງທີ່ໃກ້ຄຽງກັນ. ການຈັດຫົວເລື່ອງແບບໃໝ່ແມ່ນຖືກອອກແບບເພື່ອໃຫ້ເພີ່ມການເຊື່ອມໂຍງ ແລະ ສ້າງໂອກາດໃນການປັບປຸງການຮຽນເປັນຫຼັກ.

ວິຊາທີ່ຈະສອນໃນຊັ້ນປະຖົມປະກອບມີ 9 ວິຊາ ຄື: ພາສາລາວ, ຄະນິດສາດ, ວິທະຍາສາດ ແລະ ສິ່ງແວດລ້ອມ, ຄຸນສົມບັດສຶກສາ, ສິລະປະກຳ ແລະ ຫັດຖະກຳ, ດົນຕີ, ພະລະສຶກສາ, ພາສາອັງກິດ (ເລີ່ມສອນໃນຊັ້ນ ປ. 3 ຂຶ້ນໄປ) ແລະ ສັງຄົມສຶກສາ (ເລີ່ມສອນໃນຊັ້ນ ປ. 4 ຂຶ້ນໄປ). ຫົວເລື່ອງໃນແຕ່ລະວິຊາ ແມ່ນຈະຖືກສອນພ້ອມກັນໃນແຕ່ລະຊັ້ນຮຽນ, ຊຶ່ງຈະຊ່ວຍໃຫ້ຄູສອນຫ້ອງຄວບສາມາດວາງແຜນການສອນ ແລະ ສອນບົດຮຽນໄດ້ດີ.

ປຶ້ມແບບຮຽນໃໝ່ນີ້ຈະມີສີສັນ ແລະ ຮູບພາບທີ່ຫຼາກຫຼາຍ ເພື່ອເພີ່ມຄວາມໜ້າສົນໃຈ ແລະ ເຮັດໃຫ້ນັກຮຽນສາມາດຈື່ໄດ້ດີ. ໃນຂະນະດຽວກັນ, ປຶ້ມຄູ່ມືຄູໃໝ່ມີລາຍລະອຽດການສອນຫຼາຍກວ່າເກົ່າ ແລະ ວິທີການສອນໃນບົດຮຽນແຕ່ລະບົດ ພ້ອມທັງມີຄຳແນະນຳ ໃນການໃຊ້ຄວາມຮູ້ໃນທ້ອງຖິ່ນ, ການສ້າງກິດຈະກຳເພີ່ມ, ການຮຽນການສອນໃນຫ້ອງຄວບ ຫຼື ການສອນນັກຮຽນຊົນເຜົ່າ ຫຼື ການສອນນັກຮຽນທີ່ບໍ່ເວົ້າພາສາລາວ ເປັນພາສາທຳອິດ.

ຄຸນລັກສະນະພິເສດໜຶ່ງຂອງຫຼັກສູດໃໝ່ນີ້ ແມ່ນມີການປະຖົມນິເທດເປັນເວລາໜຶ່ງອາທິດ. ໃນອາທິດທຳອິດ, ນັກຮຽນ ຊັ້ນ ປ.1 ທຸກຄົນ ຈະເຮັດກິດຈະກຳເພື່ອຊ່ວຍໃຫ້ພວກເຂົາເຈົ້າ ມີຄວາມລຶ້ງເຄີຍກັບຊີວິດໃນໂຮງຮຽນ ແລະ ສ້າງໃຫ້ເຂົາເຈົ້າມີຄວາມໝັ້ນໃຈ ໃນການປະຕິບັດກິດຈະວັດປະຈຳວັນ, ພຶດຕິກຳ ແລະ ທັກສະທີ່ຈຳເປັນໃນໂຮງຮຽນ.

ໂດຍມີເປົ້າໝາຍເພື່ອປັບປຸງຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ, ການພັດທະນາຫຼັກສູດໃໝ່ແມ່ນນຳໃຊ້ທິດສະດີການຮຽນຂອງເດັກນ້ອຍ ແລະ ຫຼັກການວິທີການສອນຊັ້ນປະຖົມທີ່ມີປະສິດທິພາບ. ດັ່ງນັ້ນ, ການປ່ຽນແປງທີ່ພົ້ນເດັ່ນອັນໜຶ່ງຢູ່ໃນຫຼັກສູດໃໝ່ຈຶ່ງແມ່ນວິທີການສອນ. ຫຼັກສູດໃໝ່ຈະສົ່ງເສີມການຮຽນແບບມີສ່ວນຮ່ວມຂອງຜູ້ຮຽນ.

ນັກຮຽນຈະມີສ່ວນຮ່ວມໃນການຮຽນໂດຍການເຮັດກິດຈະກຳ ທີ່ຈະຊ່ວຍໃຫ້ພວກເຂົາໄດ້ຮັບຄວາມຮູ້ໃໝ່ ແລະ ນຳໃຊ້ໃຫ້ເປັນປະໂຫຍດ. ຄູຈະເປັນຜູ້ອຳນວຍຄວາມສະດວກ ຫຼາຍກ່ວາທີ່ຈະເປັນຜູ້ສົ່ງຂໍ້ມູນພຽງຝ່າຍດຽວ. ນັກຮຽນ ຈະໄດ້ຮຽນໂດຍການເຮັດກິດຈະກຳທີ່ມີຄວາມໝາຍ ແລະ ຄິດທົບທວນຄືນ ສິ່ງທີ່ຕົນກຳລັງຮຽນຢູ່.

*“ແນ່ນອນທີ່ສຸດ, ເມື່ອເຮົາສ້າງຫຼັກສູດ ແລະ ບົດແນະນຳສື່ການຮຽນການສອນໃໝ່ ເຮົາຕ້ອງການໃຫ້ຄູຜູ້ທີ່ມີບົດບາດສຳຄັນ ໃນການປະຕິບັດຢູ່ຂັ້ນພື້ນ*

*ຖານໄດ້ມີຄວາມຄຸ້ນເຄີຍກັບເນື້ອໃນ ແລະ ວິທີການສິດສອນໃນຫຼັກສູດນັ້ນ*". ທ່ານ ຣສ. ປອ. ຄໍາພາຍ ສີສະຫວັນ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ກ່າວຢູ່ກອງປະຊຸມຄະນະຊີ້ນໍາວຽກງານການປັບປຸງຫຼັກສູດຊັ້ນປະຖົມໃນເດືອນພຶດສະພາ 2018.

"*ການພັດທະນາຫຼັກສູດຊັ້ນປະຖົມ ແມ່ນບາດກ້າວທໍາອິດໃນການປັບປຸງຜົນການຮຽນຂອງນັກຮຽນ. ແຕ່ຂັ້ນຕອນທີສອງ, ການຝຶກອົບຮົມ ແລະ ການສະໜັບສະໜູນຄູທີ່ມີຄຸນນະພາບແມ່ນສິ່ງຈໍາເປັນ ເພື່ອຮັບປະກັນໃຫ້ຄູມີຄວາມສາມາດໃນການປະຕິບັດຫຼັກສູດ ໃຫ້ບັນລຸຜົນສໍາເລັດ*". ທ່ານ ແອນເດຣສ ເຊີບຣູກ, ອະດີດຮອງເອກອັກຄະລັດຖະທູດ, ສະຖານທູດອົດສະຕຣາລີ ກ່າວ. "*ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ, ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ ມີຄວາມພາກພູມໃຈທີ່ໄດ້ເປັນຄູ່ຮ່ວມພັດທະນາ ກັບ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ກະຊວງສຶກສາທິການ ແລະ ກິລາ ໃນການພັດທະນາ ແລະ ນໍາໃຊ້ຫຼັກສູດໃໝ່ນີ້*". ທ່ານ ແອນເດຣສ ກ່າວເພີ່ມເຕີມ.

ການຝຶກອົບຮົມ ແລະ ສະໜັບສະໜູນຄູແມ່ນມີຄວາມສໍາຄັນ ແລະ ຈໍາເປັນ ເພື່ອຮັບປະກັນໃຫ້ຄູມີຄວາມສາມາດໃນການປະຕິບັດຫຼັກສູດໃໝ່ນີ້ໃຫ້ໄດ້ຮັບຜົນສໍາເລັດ. ຄູແມ່ນຜູ້ທີ່ຈະນໍາເອົາຫຼັກສູດໄປຜັນຂະຫຍາຍໃນຫ້ອງຮຽນ ແລະ ມີບົດບາດສໍາຄັນ ໃນການເຮັດໃຫ້ຫຼັກສູດໃໝ່ ທີ່ມີຄວາມສ້າງສັນນີ້ ສາມາດປະສົບຜົນສໍາເລັດໄດ້. ເອກະສານຝຶກອົບຮົມໃຫ້ຄູປະຈໍາການ ແມ່ນຈະຖືກພັດທະນາໂດຍອີງຕາມເນື້ອໃນ ແລະ ວິທີການສອນຂອງຫຼັກສູດຊັ້ນປະຖົມທີ່ໄດ້ປັບປຸງໃໝ່.

ວຽກງານການນໍາໃຊ້ຫຼັກສູດໃໝ່ ເປັນໜ້າວຽກທີ່ໃຫຍ່ ເຊິ່ງຕ້ອງຮັບການເອົາໃຈໃສ່ ແລະ ສະໜັບສະໜູນ ຈາກຫຼາຍພາກສ່ວນເຊັ່ນ: ຈາກຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ຕະຫຼອດຮອດຂັ້ນໂຮງຮຽນ. ຫຼັກສູດຊັ້ນປະຖົມສຶກສາສະບັບໃໝ່ ທີ່ມີອຸປະກອນການຮຽນການສອນຄົບຊຸດ ຈະປະກອບສ່ວນອັນສໍາຄັນ ເພື່ອເຮັດໃຫ້ຜົນການຮຽນຂອງເດັກນ້ອຍມີຄຸນນະພາບດີຂຶ້ນ. ພ້ອມດຽວກັນນັ້ນ, ຫຼັກສູດດັ່ງກ່າວນີ້ ຈະຊ່ວຍໃຫ້ເດັກຍິງ ແລະ ເດັກຊາຍ ທີ່ມີອາຍຸໃນເກນເຂົ້າຮຽນໃນຊັ້ນປະຖົມສຶກສາ ຂອງ ສປປ ລາວ ຈໍານວນຫຼາຍຂຶ້ນສາມາດອ່ານອອກຂຽນໄດ້, ສາມາດຄິດໄລ່ເລກຂັ້ນພື້ນຖານ ແລະ ມີທັກສະຊີວິດທີ່ຈໍາເປັນອື່ນໆ.

- ຫຼັກສູດໃໝ່ ສໍາລັບຂັ້ນ ປ. 1 ຈະຖືກນໍາໃຊ້ ໃນເດືອນກັນຍາ 2019.
- ຄູທຸກຄົນ ຈະໄດ້ຮັບການຝຶກອົບຮົມກ່ຽວກັບ ວິທີການສອນໃໝ່.
- ໂຮງຮຽນທຸກແຫ່ງ ຈະໄດ້ຮັບອຸປະກອນການຮຽນການສອນສະບັບປັບປຸງ.
- ນັກຮຽນຂັ້ນ ປ. 1 ທຸກຄົນ ຈະໄດ້ຮັບປຶ້ມແບບຮຽນໃໝ່.
- ສື່ການຮຽນການສອນທຸກຢ່າງ ໄດ້ຮັບການທົດລອງ ຢູ່ໂຮງຮຽນເປົ້າໝາຍທົ່ວປະເທດ ແລະ ໄດ້ຮັບການປັບປຸງຕາມຄໍາແນະນໍາຈາກການທົດລອງດັ່ງກ່າວເລີ່ມແຕ່ປີ 2015.





**ປຶ້ມແບບຮຽນວິຊາພາສາລາວ ແລະ ສື່ການສອນສະບັບປັບປຸງ ຢູ່ໂຮງຮຽນແຫ່ງໜຶ່ງ ເຊິ່ງນອນຢູ່ໃນ 25 ໂຮງຮຽນຄັດເລືອກສໍາລັບການທົດລອງຫຼັກສູດໃໝ່.**

# ແຜນງານການພັດທະນາວິຊາຊີບຄູ ເພື່ອປັບປຸງຜົນການຮຽນຂອງນັກຮຽນ



*“ ຖ້າຄູບໍ່ມີຄວາມຮູ້ພື້ນຖານ ກ່ຽວກັບ ລາຍວິຊາທີ່ຕົນສອນຢ່າງເລິກເຊິ່ງ, ມີທັກສະການສອນທີ່ດີ, ແລະ ເຕັກນິກການສອນເໝາະສົມ, ພວກເຮົາ ກໍ່ຈະບໍ່ສາມາດບັນລຸຜົນການຮຽນຂອງນັກຮຽນຕາມເປົ້າໝາຍໄດ້”.*

**ທ່ານ ເກດ ພັນລັກ, ວ່າການຫົວໜ້າກົມສ້າງຄູ, ສສກ.**

ການຄົ້ນຄວ້າວິໄຈທົ່ວໂລກໄດ້ຊີ້ໃຫ້ຮູ້ວ່າ ຄຸນນະພາບການສອນຂອງຄູ ມີຜົນກະທົບໂດຍກົງຕໍ່ຜົນການຮຽນຂອງນັກຮຽນ. ເພື່ອປັບປຸງຜົນການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ໃນ ສປປ ລາວ, ສິ່ງສຳຄັນແມ່ນການປັບປຸງການຮຽນ-ການສອນຕັ້ງແຕ່ເລີ່ມຕົ້ນ ໂດຍການປັບປຸງທັງຄຸນນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດສ້າງຄູປະຖົມສຶກສາ ແລະການຝຶກອົບຮົມໃຫ້ແກ່ຄູຝຶກຄູ ເພື່ອປະຕິບັດຫຼັກສູດດັ່ງກ່າວ ເຊິ່ງນັ້ນແມ່ນທີ່ມາຂອງວຽກງານການພັດທະນາວິຊາຊີບຄູ (ວຽກງານ PDP) ຊຶ່ງໄດ້ຮັບການສະໜັບສະໜູນ ຈາກແຜນງານບີຄວາ.

ວຽກງານການພັດທະນາວິຊາຊີບຄູຖືກຈັດຕັ້ງປະຕິບັດ ໃນຮູບແບບກອງປະຊຸມເຊິ່ງຈັດຂຶ້ນ 2 ຄັ້ງຕໍ່ປີ, ມີຄູຝຶກຄູຫຼັກຈາກວິທະຍາໄລຄູ ຈຳນວນ 8 ແຫ່ງ ເຂົ້າຮ່ວມເປັນເວລາ 2 ອາທິດ. ກອງປະຊຸມຄັ້ງທຳອິດ ໄດ້ຈັດຂຶ້ນໃນເດືອນສິງຫາ 2017 ທີ່ແຂວງຫຼວງພະບາງ, ແລະ ຄັ້ງທີສອງ ໄດ້ຈັດຂຶ້ນໃນຕົ້ນເດືອນກຸມພາ 2018 ຢູ່ແຂວງສະຫວັນນະເຂດ.

“*ສ່ວນໃຫຍ່ແລ້ວ ກອງປະຊຸມແມ່ນໄດ້ຈັດກຸ່ມອາຈານສອນຈາກວິທະຍາໄລຄູ ໄປຕາມກຸ່ມລາຍວິຊາທີ່ຕົນເອງສອນ, ແຕ່ລະກຸ່ມສົນທະນາລົງເລິກບັນຫາສະເພາະຂອງແຕ່ລະລາຍວິຊາ ນັບທັງດ້ານເນື້ອໃນ ແລະ ຄວາມຮູ້ທາງດ້ານວິຊາຄູ. ໃນກອງປະຊຸມທັງສອງຄັ້ງນີ້, ຄູຝຶກຫຼັກຂອງວິທະຍາໄລຄູຈະເຜີຍແຜ່ຄວາມຮູ້ໃໝ່ທີ່ຕົນໄດ້ຮັບໃຫ້ແກ່ຄູອາຈານທີ່ສອນວິຊາດຽວກັນກັບຕົນຢູ່ວິທະຍາໄລຄູ ແລະ ຈັດກິດຈະກຳໃນການສັງເກດການສອນ, ການສຶກສາການສອນ, ແລະ ການສຶກສາເປັນກຸ່ມ* ”. ທ່ານ ເກດ ພັນລັກ, ວ່າການຫົວໜ້າກົມສ້າງຄູ , ສສກ ກ່າວ.

ການຮຽນຮູ້ຈາກການສັງເກດການສອນແມ່ນໃຈກາງຂອງວຽກງານນີ້. “*ພວກເຮົາໃຫ້ຄູອາຈານທີ່ສອນໃນວິທະຍາໄລຄູ ສັງເກດການສອນຢູ່ໂຮງຮຽນປະຖົມ ເພື່ອໃຫ້ເຂົ້າໃຈສະພາບການສອນຕົວຈິງຢູ່ຫ້ອງຮຽນຊັ້ນປະຖົມໄດ້ດີຂຶ້ນ, ເພື່ອສ້າງປະສົບການການສອນເດັກນ້ອຍ ແລະ ສິ່ງທ້າທາຍທີ່ຄູສອນຊັ້ນປະຖົມພົບພໍ້*”. ທ່ານນາງ ຄຳເຄື່ອນ ວັນນະສຸກ, ຜູ້ປະສານງານດ້ານການສຶກສາຂອງແຜນງານບີຄວາ, ທີ່ເຮັດວຽກຢ່າງໃກ້ຊິດກັບກົມສ້າງຄູກ່າວ.

ວິທີການຝຶກອົບຮົມດັ່ງກ່າວ ເປັນຜົນມາຈາກບົດວິເຄາະຄວາມຕ້ອງການທາງດ້ານການຝຶກອົບຮົມຂອງຄູຝຶກຄູ ຊຶ່ງໄດ້ດຳເນີນນັບແຕ່ເດືອນກັນຍາ 2015 ເຖິງ ເດືອນມັງກອນ 2016. ຜົນປະກົດວ່າ ຄູອາຈານສອນຢູ່ວິທະຍາໄລຄູສ່ວນໃຫຍ່ ມີປະສົບ



ການດ້ານການສອນໃນຫ້ອງຮຽນຊັ້ນປະຖົມສຶກສາໜ້ອຍ. ສະນັ້ນ, ການສຸມໃສ່ພາກປະຕິບັດການຝຶກຝົນການສອນຢູ່ຫ້ອງຮຽນຊັ້ນປະຖົມສຶກສາເປັນສິ່ງສຳຄັນ ສຳລັບວຽກງານນີ້.

ທ່ານ ສອນແກ້ວ ທິບພະວັນ, ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ, ຢູ່ວິທະຍາໄລຄູຄັງໄຂ ແລະ ເປັນຄູຝຶກຄູວິຊາພາສາລາວ ແລະ ວັນນະຄະດີ ກໍເປັນໜຶ່ງໃນຜູ້ເຂົ້າຮ່ວມຝຶກອົບ ຮົມໃນວຽກງານດັ່ງກ່າວ ໄດ້ກ່າວວ່າ "*ເມື່ອຂ້າພະເຈົ້າເດີນທາງກັບມາວິທະຍາໄລຄູຄັງໄຂ, ຂ້າພະເຈົ້າໄດ້ຈັດການສັງເກດການສອນ ຮ່ວມກັບຄູສອນວິຊາພາສາລາວຈຳນວນ 4 ຫ້ອງ. ພວກຂ້າພະເຈົ້າໄດ້ຈົດບັນຫາ ຈາກການສັງເກດການສອນຂອງພວກຂ້າພະເຈົ້າ ແລ້ວເລືອກເອົາບັນຫາທີ່ພວກເຮົາຕ້ອງການສຸມໃສ່ມາສົນທະນາໃນການສຶກສາກຸ່ມ. ຕົວຢ່າງ, ພວກເຮົາຈະຝຶກອົບຮົມຄູ ໃຫ້ຊ່ວຍນັກຮຽນທີ່ພົບຄວາມຫຍຸ້ງຍາກໃນການສະກົດຄຳໄດ້ຄືແນວໃດ?* ".

"*ແຜນພັດທະນາວິຊາຊີບຄູ ແມ່ນສຳຄັນຫຼາຍ ເພື່ອຮັບປະກັນວ່າຄູທີ່ສອນນັກຮຽນຄູຂອງພວກເຮົາກຳລັງປັບປຸງຄວາມຮູ້ຂອງຕົນ, ຊອກຫາວິທີການສອນທີ່ດີທີ່ສຸດ ເພື່ອຮັບມືກັບສິ່ງທ້າທາຍທີ່ນັກຮຽນລາວພົບພໍ້ຢູ່ສະເໝີ*". ທ່ານ ເກດ ກ່າວ "*ປະຈຸບັນນີ້ ພວກເຮົາກຳລັງກະກຽມກອງປະຊຸມຊຸດຕໍ່ໄປ, ເຊິ່ງຈະຈັດຂຶ້ນໃນເດືອນສິງຫາ 2018. ຈຸດສຸມ ແມ່ນການອຳນວຍຄວາມສະດວກ ແລະ ທັກສະ ການຈັດຕັ້ງຕ່າງໆ ໃຫ້ຄູຝຶກເຫຼົ່ານີ້* ". ໃນກອງປະຊຸມຄັ້ງຕໍ່ໄປນີ້ຄູຝຶກຫຼັກຈະເຮັດໜ້າທີ່ເປັນຜູ້ນຳພາ ແລະ ດຳເນີນກອງປະຊຸມໃຫ້ແກ່ເພື່ອນຮ່ວມງານ ຂອງເຂົາເຈົ້າດ້ວຍຕົນເອງ.

ແຜນງານ PDP ມີເປົ້າໝາຍໃນການຊ່ວຍໃຫ້ຄູຢູ່ວິທະຍາໄລຄູ ນຳສິ່ງຫຼັກສູດການສຶກສາຂອງນັກຮຽນຄູ ໃຫ້ແກ່ນັກຮຽນຄູ.

ຄູຝຶກຄູ ແລະ ນັກພັດທະນາການສຶກສາຈຳນວນ 62 ທ່ານ ໄດ້ເຂົ້າຮ່ວມໃນແຜນງານ PDP.

ໃນເບື້ອງຕົ້ນ ແຜນງານນີ້ ໄດ້ສຸມໃສ່ 3 ວິຊາຫຼັກຄື ພາສາລາວ, ຄະນິດສາດ ແລະ ວິທະຍາສາດ.




*" ໃນກອງປະຊຸມຄັ້ງທຳອິດ, ພວກເຮົາໄປໂຮງຮຽນປະຖົມທີ່ພວກເຮົາຄັດເລືອກ, ຂ້າພະເຈົ້າ ໄດ້ສັງເກດເຫັນວ່າເດັກນ້ອຍຮຽນແນວໃດ ແລະ ພວກເຂົາມີບັນຫາຫຍັງແດ່. ຂ້າພະເຈົ້າ ຕ້ອງໄດ້ກະກຽມບົດສອນ ແລະ ຂຶ້ນສອນຫ້ອງຮຽນປະຖົມ. ປະຈຸບັນ, ຂ້າພະເຈົ້າ ຮູ້ວ່າຫຼາຍຂຶ້ນວ່າ ນັກຮຽນຂອງຂ້າພະເຈົ້າຈະພົບພໍ້ບັນຫາຫຍັງແດ່ເມື່ອສອນເດັກນ້ອຍ".*

**ທ່ານ ສອນແກ້ວ ທິບພະວັນ, ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ, ວິທະຍາໄລຄູຄັງໄຂ.**

# ນັກຮຽນຄູທ້ອງຖິ່ນຊຸດທຳອິດ ຈະກັບເມືອສອນຢູ່ໂຮງຮຽນໃນບ້ານຂອງຕົນໃນໄວໆນີ້

ຄູໃໝ່ ຈຳນວນ 212 ຄົນ ຈະຖືກສົ່ງໄປສອນຢູ່ຊຸມຊົນຂອງພວກເຂົາ ຢູ່ເຂດຊົນນະບົດ ໃນເດືອນກັນຍາ 2018.

ຄູໃໝ່ ອີກຈຳນວນ 124 ຄົນ ຈະຖືກສົ່ງໄປສອນຢູ່ຊຸມຊົນຂອງພວກເຂົາ ຢູ່ເຂດຊົນນະບົດ ໃນເດືອນກັນຍາ 2019 ແລະ 25 ຄົນ ໃນເດືອນກັນຍາ 2020.



ບົດຄົ້ນຄວ້າຈຳນວນຫຼາຍທົ່ວໂລກໄດ້ຊີ້ໃຫ້ຮູ້ວ່າ ຄູຊົນເຜົ່າແມ່ນເໝາະສົມດີກ່ວາ ສຳລັບຊຸມຊົນຫ່າງໄກສອກຫຼີກ ໂດຍສະເພາະຊຸມຊົນຊົນເຜົ່າ. ຄູຊົນເຜົ່າເຂົ້າໃຈພາສາ ແລະ ວັດທະນະທຳຂອງນັກຮຽນຕົນ, ເຊິ່ງມີຄວາມສຳຄັນໃນການເຂົ້າຮຽນປີທຳອິດ ແລະ ການຮຽນພາສາລາວຂອງເດັກນ້ອຍ.

ໃນປະເທດທີ່ມີຊົນເຜົ່າ ຫຼາຍກວ່າ 50 ຊົນເຜົ່າທີ່ແຕກຕ່າງກັນ, ເດັກນ້ອຍຢູ່ບ້ານຫ່າງໄກສອກຫຼີກຈຳນວນຫຼາຍ ບໍ່ເຄີຍໄດ້ຮຽນພາສາລາວເມື່ອພວກເຂົາເຂົ້າໂຮງຮຽນໃໝ່. ບໍ່ມີຜູ້ໃດສາມາດເປັນຂົວເຊື່ອມຕໍ່ດ້ານພາສາ ແລະ ຊ່ວຍເດັກໃນຊຸມຊົນຂອງພວກເຂົາ ໃນການເວົ້າ, ອ່ານ, ຂຽນ, ແລະ ນັບເລກ ລວມທັງ ທັກສະຕ່າງໆ ທີ່ຈຳເປັນໃນການຊອກວຽກ ແລະ ກຽມພ້ອມສຳລັບຊີວິດຂອງພວກເຂົາໄດ້ດີໄປກວ່າຄູຊົນເຜົ່າ. ນອກຈາກນີ້, ຄູຊົນເຜົ່າທີ່ມາຈາກທ້ອງຖິ່ນ ຍັງມີແນວໂນ້ມທີ່ຈະຢູ່ສືບຕໍ່ການສອນຢູ່ໂຮງຮຽນໃນບ້ານຂອງພວກເຂົາ ແລະ ຄູທ້ອງຖິ່ນເພດຍິງກໍຍັງເປັນຕົວແບບໃຫ້ແກ່ແມ່ຍິງ, ໂດຍສະເພາະເດັກຍິງ ໃນຊຸມຊົນຂອງພວກເຂົາອີກດ້ວຍ.

ໂຄງການທຶນການສຶກສາຄູຂອງແຜນງານບີຄວາ ເຊິ່ງຮ່ວມມືກັບ ສສກ ໄດ້ໃຫ້ການສະໜັບສະໜູນນັກຮຽນທ້ອງຖິ່ນຈຳນວນ 361 ຄົນ ຈາກເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ. ທ້າວ ສີປະເສີດ ສົມພອນ ແມ່ນໜຶ່ງໃນນັ້ນ.

ລາວມາຈາກບ້ານເທີ້ມນ້ອຍ, ໝູ່ບ້ານຊົນເຜົ່າມະກອງ ແຂວງສະຫວັນນະເຂດ ທີ່ທ່ານເອກອັກຄະລັດຖະທູດອົດສະຕຣາລີໄດ້ໄປຢ້ຽມຢາມໃນໂອກາດການຢ້ຽມຢາມຢ່າງເປັນທາງການຄັ້ງທຳອິດຂອງທ່ານ. "*ໃນພິທີເປີດໂຄງ ການກໍ່ສ້າງໂຮງຮຽນປະຖົມຫຼັງໃໝ່, ທ່ານເອກອັກຄະລັດຖະທູດ ຖາມວ່າໃຜຈະເປັນຄູຄົນ ໃໝ່ຢູ່ບ້ານນີ້. ນ້ອງກໍຍົກມືຂຶ້ນດ້ວຍຄວາມພາກພູມໃຈ!* ".

ທ້າວ ສີປະເສີດ ສືບຕໍ່ອະທິບາຍວ່າ "*ນ້ອງມີຄວາມໄຝ່ຝັນຢາກເປັນຄູມາແຕ່ດົນແລ້ວແລະນ້ອງກໍຕັ້ງໃຈຮຽນຢູ່ໂຮງຮຽນ. ເມື່ອນ້ອງຮຽນຈົບຊັ້ນມັດທະຍົມ, ຄະນະພັດທະນາການສຶກສາຂັ້ນບ້ານ ໄດ້ແນະນຳໃຫ້ນ້ອງຮູ້ໂຄງການທຶນການສຶກສານັກຮຽນຄູຂອງບີຄວາ ແລະ ສສກ ນ້ອງກໍ່ໄດ້ສະໝັກທັນທີ. ນ້ອງໄດ້ຖືກຄັດເລືອກ ແລະ ເລີ່ມຮຽນຢູ່ວິທະຍາໄລຄູໃນເດືອນກັນຍາ 2015 ເປັນຕົ້ນມາ; ຫຼັກສູດການສອນແມ່ນເລັ່ງລັດ ແລະ ມີຄວາມໜ້າສົນໃຈ* ".

ເຊັ່ນດຽວກັນກັບນັກຮຽນຄູປີສຸດທ້າຍຜູ້ອື່ນໆ, ທ້າວ ສີປະເສີດ ໄດ້ສຳເລັດການຝຶກສອນເປັນເວລາ 12 ອາທິດ ຢູ່ໂຮງຮຽນປະຖົມໃນເມືອງເປົ້າໝາຍ. "*ຕອນທີ່ລົງຝຶກສອນ ນ້ອງໄດ້ສອນໝົດທັງ 9 ວິຊາ. ສິ່ງທ້າທາຍທີ່ສຸດແມ່ນການວາງແຜນການສອນ. ນ້ອງຕ້ອງໄດ້ກະກຽມເຕັກນິກການສອນສຳລັບທຸກໆວິຊາ ລ່ວງໜ້າ 1 ມື້. ນ້ອງຕ້ອງໄດ້ຄິດວ່າຈະອະທິບາຍບົດຮຽນແນວໃດ ເພື່ອໃຫ້ໝັ້ນໃຈວ່ານັກຮຽນເຂົ້າໃຈ. ສິ່ງຫຍຸ້ງຍາກອື່ນແມ່ນຈະຮັບມືກັບນັກຮຽນທີ່ປະພຶດຕົນບໍ່ເໝາະສົມໃນຫ້ອງຮຽນຄືແນວໃດ. ຈະເຮັດແນວໃດໃຫ້ພວກເຂົາສົນໃຈແລະມີສ່ວນຮ່ວມໃນການຮຽນ. ການລົງຝຶກສອນໄດ້ຊ່ວຍໃຫ້ນ້ອງມີຄວາມໝັ້ນໃຈຫຼາຍ. ດຽວນີ້, ນ້ອງກໍ່ມີຄວາມຕື່ນເຕັ້ນຫຼາຍທີ່ຈະກັບບ້ານ ໃນນາມຄູສອນຊັ້ນປະຖົມຄົນໃໝ່!* ".



**ທ້າວ ສີປະເສີດກຳລັງຝຶກສອນຢູ່ບ້ານເທີ້ມນ້ອຍໃນອາທິດສຸດທ້າຍຂອງການລົງຝຶກຫັດ. ອາຄານໂຮງຮຽນຊົ່ວຄາວນີ້ ໄດ້ຖືກແທນທີ່ດ້ວຍອາຄານໃໝ່ໂດຍການຊ່ວຍເຫຼືອຂອງແຜນງານບີຄວາ.**

# ແຜນງານບີຄວາຊ່ວຍເຫຼືອຊຸມຊົນ ໃນການປຸກສ້າງຫ້ອງຮຽນໃໝ່



ຈະປຸກຫ້ອງຮຽນໃໝ່ຢູ່ 174 ໂຮງຮຽນທົ່ວປະເທດ.

ຈະມີການປຸກຫ້ອງນໍ້າ 296 ຫ້ອງ ແລະ ສະໜອງນໍ້າຢູ່ 149 ຈຸດ.

ຄພສບ ຢູ່ 174 ບ້ານ ໄດ້ຮັບການຝຶກອົບຮົມ ກ່ຽວກັບ ຮູບແບບສັນຍາທີ່ໃຫ້ຊຸມຊົນເປັນເຈົ້າການ.



*"ການໃຫ້ຊຸມຊົນມີສ່ວນຮ່ວມຢ່າງຫ້າວຫັນໃນການກໍ່ສ້າງໂຮງຮຽນ ຈະເຮັດໃຫ້ພວກເຂົາມີຄວາມເປັນເຈົ້າການໃນການຄຸ້ມຄອງສິ່ງປຸກສ້າງ ພ້ອມທັງຍັງສ້າງຄວາມສາມາດໃຫ້ພວກເຂົາບໍາລຸງຮັກສາໂຮງຮຽນໄດ້ໃນອະນາຄົດ".*

**ທ່ານ ໜູຄໍາ ສີສະຫວັດ, ຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາເມືອງສາລະວັນ.**

*"ປະຊາຊົນບ້ານນາໂພນ້ອຍ ປຸກສ້າງໂຮງຮຽນປະຖົມດ້ວຍຕົນເອງໃນປີ 1986 ໂດຍການນໍາໃຊ້ວັດສະດຸຈາກທ້ອງຖິ່ນ ເຊັ່ນ ໄມ້ແປ້ນ".* ທ່ານ ສົມສັກ ຮູ້ຄໍາມະນີ, ນາຍບ້ານ ບ້ານນາໂພນ້ອຍ ຢູ່ແຂວງສາລະວັນ ກ່າວ.

*"ພວກເຮົາມີຄວາມດີໃຈຫຼາຍ ທີ່ໄດ້ຮັບການຊ່ວຍເຫຼືອ ຈາກກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍຜ່ານແຜນງານບີຄວາ ໃນການສ້າງຫ້ອງຮຽນ ແລະ ຫ້ອງນໍ້າໃໝ່; ນອກນັ້ນ, ພວກເຮົາຍັງຈະໄດ້ຕ້ອນຮັບ ນາງ ໃບພອນ ແກ້ວບຸນຮຸ່ງ ຜູ້ໄດ້ຮັບທຶນການສຶກສາ ຂອງແຜນງານບີຄວາ ແລະ ຈະເປັນຄູສອນໃໝ່ ຢູ່ໂຮງຮຽນຂອງພວກເຮົາໃນເດືອນກັນຍາ ".*

ໃນການຈັດຕັ້ງປະຕິບັດການປຸກສ້າງ, ແຜນງານບີຄວາ ນໍາໃຊ້ວິທີການຮູບແບບສັນຍາທີ່ໃຫ້ຊຸມຊົນເປັນເຈົ້າການ ເພື່ອໃຫ້ຊຸມຊົນທ້ອງຖິ່ນ ໂດຍຜ່ານຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ເປັນຜູ້ຄຸ້ມຄອງຢ່າງເຕັມສ່ວນ. ຄພສບ ເປັນຜູ້ແຕ່ງຕັ້ງທີມງານບໍລິຫານໂຄງການກໍ່ສ້າງ ແລະ ຄະນະກໍາມະການຈັດຊື້ ເພື່ອໃຫ້ບໍລິຫານກອງທຶນການກໍ່ສ້າງທີ່ໄດ້ຮັບຈາກບີຄວາ. ທັງສອງທີມນີ້ ລ້ວນແຕ່ປະກອບມີສະມາຊິກທີ່ເປັນແມ່ຍິງ. ພວກເຂົາຈະຈັດຈ້າງນາຍຊ່າງທີ່ມີຄວາມຊໍານານງານ ແລະ ແຮງງານໃນຊຸມຊົນໃນການກໍ່ສ້າງ ແທນການເຮັດສັນຍາມອບເໝົາໃຫ້ແກ່ພາຍນອກ.

ວິສະວະກອນໃນແຜນງານບີຄວາ ແລະ ພະນັກງານຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ) ເປັນຜູ້ຮັບຜິດຊອບຄຸ້ມຄອງ ວຽກງານເຕັກນິກລວມ ຮັບປະກັນວ່າການອອກແບບອາຄານໂຮງຮຽນຖືກຕ້ອງຕາມມາດຕະຖານແຫ່ງຊາດ ຂອງ ສສກ. ກິດຈະກໍາກໍ່ສ້າງໂຮງຮຽນຕ່າງໆ ໄດ້ເລີ່ມດໍາເນີນໃນທົ່ວປະເທດ ໃນເດືອນກຸມພາທີ່ຜ່ານມາ ໂດຍເລີ່ມຈາກການຝຶກອົບຮົມຊຸມຊົນກ່ຽວກັບວິທີການຮູບແບບສັນຍາທີ່ໃຫ້ຊຸມຊົນເປັນເຈົ້າການໃນການກໍ່ສ້າງ.

*"ໃນເດືອນກຸມພາ, ຕາງໜ້າ ສກມ ສາລະວັນ ໄດ້ມາອະທິບາຍກ່ຽວກັບບົດບາດ ຂອງພວກເຮົາ ແລະ ແນະນໍາກ່ຽວກັບການຄັດເລືອກຜູ້ສະໜອງວັດສະດຸ, ການຕິດຕາມການກໍ່ສ້າງ ແລະ ການລາຍງານການເງິນ. ແຮງງານແມ່ນມາຈາກບ້ານຂອງພວກເຮົາ. ພວກເຮົາຈະປຸກສາງເພື່ອເປັນບ່ອນເກັບມ້ຽນວັດສະດຸກໍ່ສ້າງ. ນອກຈາກນີ້ ກໍຍັງຈະໄດ້ກະກຽມບ່ອນຮຽນຊົ່ວຄາວ ເພື່ອບໍ່ໃຫ້ການຮຽນຕ້ອງຖືກຢຸດຊະງັກ ໃນໄລຍະການກໍ່ສ້າງໂຮງຮຽນ. ການຝຶກອົບຮົມແມ່ນຈະແຈ້ງດີ, ໂດຍສະເພາະ ແມ່ນວຽກການຈັດສິ່ງ ແລະ ການຄັດເລືອກຜູ້ສະໜອງວັດສະດຸ. ບ້ານຂອງພວກເຮົາມີຄວາມພູມໃຈ ທີ່ໄດ້ຮັບຜິດຊອບການກໍ່ສ້າງໂຮງຮຽນ ເຊິ່ງມັນຈະເປັນໂຮງຮຽນຂອງພວກເຮົາ, ທີ່ພວກເຮົາປຸກສ້າງເອງ. ຂ້າພະເຈົ້າຄິດວ່າ ຊຸມຊົນຈະສົ່ງເສີມລູກຫຼານ ໃຫ້ເຂົ້າຮຽນຫຼາຍຂຶ້ນ, ພວກເຮົາຈະປຸກໂຮງຮຽນທີ່ງາມ ແລະ ມີຫ້ອງນໍ້າ ຊຶ່ງຈະເຮັດໃຫ້ນັກຮຽນ ບໍ່ປະລະໂຮງຮຽນຄືແຕ່ກ່ອນ "* ທ່ານ ສົມສັກ ກ່າວ.

*"ໃນຕອນທ້າຍຂອງການຝຶກອົບຮົມ, ຄພສບ ກໍໄດ້ແຕ່ງຕັ້ງຜູ້ຮັບຜິດຊອບແຕ່ລະວຽກການກໍ່ສ້າງ ເຊິ່ງທຸກຄົນມີຄວາມພ້ອມແລະມຸ່ງໝັ້ນທີ່ຈະສ້າງໂຮງຮຽນຢ່າງໄວເທົ່າທີ່ຈະໄວໄດ້"* ທ່ານ ໜູຄໍາ ສີສະຫວັດ, ຫົວໜ້າ ສກມ ແຂວງສາລະວັນ ກ່າວ.

# ການສຶກສາມີບົດບາດສຳຄັນ ໃນການສົ່ງເສີມບົດບາດແມ່ຍິງ

ເດັກຍິງຈຳນວນຫຼາຍບໍ່ໄດ້ເຂົ້າໂຮງຮຽນ ເນື່ອງຈາກສະພາບເສດຖະກິດຄອບຄົວ, ແລະ ບ້ານຢູ່ຫ່າງໄກຈາກໂຮງຮຽນ. ນອກຈາກນີ້, ບາງຄອບຄົວຍັງມີຄວາມເຊື່ອທາງດ້ານຮີດຄອງປະເພນີວ່າເດັກຍິງຄວນເຮັດວຽກເຮືອນ ແລະ ລ້ຽງນ້ອງຢູ່ເຮືອນ. ຜູ້ປົກຄອງບາງຄົນກໍຍັງບໍ່ເຂົ້າໃຈເຖິງຄວາມສຳຄັນຂອງການສຶກສາ.

ຢ່າງໃດກໍຕາມ, ສະພາບດັ່ງກ່າວກຳລັງປ່ຽນແປງ. ລັດຖະບານລາວໄດ້ຍົກສູງການສຶກສາໂດຍສຸມໃສ່ໃຫ້ເດັກທຸກຄົນ ໂດຍບໍ່ຈຳແນກເຊື້ອຊາດ, ອາຍຸ, ເພດ ແລະ ສາສະໜາ, ໃຫ້ຮຽນຈົບການສຶກສາຊັ້ນປະຖົມ. ລັດຖະບານມີເປົ້າໝາຍສົ່ງເສີມນັກຮຽນຍິງ ໃນຊັ້ນປະຖົມໃຫ້ສືບຕໍ່ຮຽນຊັ້ນມັດທະຍົມ ແລະ ມີຄວາມພ້ອມໃນການປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ແລະ ທັງເປັນອະນາຄົດຂອງຊາດ. ການສຶກສາສຳລັບເດັກຍິງຍັງໄດ້ຮັບການພິສູດແລ້ວວ່າ ໄດ້ສ້າງການປ່ຽນແປງຢ່າງມີປະສິດຕິພາບໃນການພັດທະນາສັງຄົມ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດໃນປະເທດກຳລັງພັດທະນາ. ດັ່ງນັ້ນ, ການເຂົ້າເຖິງ ການສຶກສາບໍ່ພຽງແຕ່ເປັນການເພີ່ມ ບົດບາດໃຫ້ແກ່ຕົວເດັກຍິງເອງເທົ່ານັ້ນ ແຕ່ຍັງເພີ່ມ ບົດບາດຂອງແມ່ຍິງຢູ່ໃນສັງຄົມໃນລະດັບກວ້າງອີກດ້ວຍ.

ທ່ານ ນາງ ແສງເງິນ ໄວຍາກອນ, ຫົວໜ້າສູນພັດທະນາຫຼັກສູດ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກ່າວວ່າ: “*ການສຶກສາບໍ່ພຽງແຕ່ຊ່ວຍລຶບລ້າງການກົກໜັງສືໃນເພດຍິງເທົ່ານັ້ນ, ແຕ່ການສຶກສາຍັງຊ່ວຍສົ່ງເສີມຄວາມກ້າວໜ້າຂອງເພດຍິງ ໃຫ້ພວກເຂົາໄດ້ຮັບສິດທິມະນຸດຂັ້ນພື້ນຖານ ຊຶ່ງຈະເຮັດໃຫ້ພວກເຂົາມີທາງເລືອກໃນຊີວິດ ຊຶ່ງເປັນຜົນມາຈາກການສຶກສາ. ການສຶກສາເຮັດໃຫ້ຜູ້ຍິງເປັນຜູ້ນຳຄອບຄົວ ແລະ ເປັນຕົວແບບໃຫ້ແກ່ລູກຜູ້ຍິງໄດ້. ຜູ້ຍິງທີ່ໄດ້ຮັບການສຶກສາຈະມີຄວາມສາມາດ ແລະ ທັກສະຕ່າງໆ ເຊັ່ນດຽວກັນກັບຜູ້ຊາຍ; ພວກເຂົາມີຄວາມສາມາດ ເທົ່າທຽມກັບຜູ້ຊາຍ ຊຶ່ງຈະເຮັດວຽກຢູ່ຂະແໜງການໃດກໍໄດ້, ບໍ່ວ່າຈະເຮັດວຽກກັບລັດຖະບານ, ອົງການຈັດຕັ້ງ ຫຼື ບໍລິສັດ. ພວກເຮົາສາມາດເຫັນໄດ້ວ່າ ຜູ້ຍິງທີ່ມີຄວາມສາມາດສູງ ໄດ້ຮັບບົດບາດເປັນ ຜູ້ນຳຢ່າງຫຼວງຫຼາຍຢູ່ໃນທຸກຂົງເຂດວຽກງານຕ່າງໆ ເຊັ່ນ: ປະທານສະພາແຫ່ງຊາດຂອງ ສປປ ລາວ ກໍ່ແມ່ນຜູ້ຍິງ ແລະ ໃນນີ້ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຂອງພວກເຮົາກໍເປັນຜູ້ຍິງເຊັ່ນດຽວກັນ* ”.



*“ ໃນທັດສະນະຂອງຂ້າພະເຈົ້າ, ການສຶກສາສາມາດມີບົດບາດໃນການປ່ຽນແປງຄວາມຮັບຮູ້ກ່ຽວກັບບົດບາດຍິງຊາຍໄດ້ແນ່ນອນ ແລະ ຍັງຈະຊ່ວຍສ້າງຄວາມຮັບຮູ້ດ້ານບົດບາດຍິງຊາຍໃນໄວໜຸ່ມອີກດ້ວຍ”.*

**ທ່ານ ນາງ ແສງເງິນ ໄວຍາກອນ, ຫົວໜ້າສູນພັດທະນາຫຼັກສູດ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ).**





ທ່ານ ນາງ ແສງເງິນ ສັງເກດເຫັນວ່າ ຄວາມເຂົ້າໃຈບັນຫາບົດບາດຍິງຊາຍຢູ່ປະເທດລາວແມ່ນມີຫຼາຍຂຶ້ນ. *"ໃນຂະແໜງການສຶກສາ, ຜູ້ບໍລິຫານ, ຄູອາຈານ ແລະ ນັກຮຽນ ໄດ້ຮັບການຝຶກອົບຮົມ ໃຫ້ເຂົ້າໃຈເຖິງຄວາມສະເໝີພາບບົດບາດຍິງຊາຍ ຢ່າງເລິກເຊິ່ງ, ແລະ ເຂົ້າໃຈວ່າ ການສຶກສາ, ອຸປະກອນການສອນ ແລະ ສື່ການຮຽນ-ການສອນຕ່າງໆ ສາມາດຊຸກຍູ້ຄວາມກ້າວໜ້າ ແລະ ບົດບາດແມ່ຍິງໃນສັງຄົມໄດ້ຄືແນວໃດ"*.

ທ່ານ ນາງ ແສງເງິນ ແລະ ທີມງານພັດທະນາຫຼັກສູດ ແລະ ສື່ການຮຽນການສອນຈາກ ສວສ ເຊິ່ງມີຈຳນວນສະມາຊິກສອງສ່ວນສາມແມ່ນເພດຍິງໄດ້ເຂົ້າຮ່ວມໃນການປັບປຸງຫຼັກສູດຊັ້ນປະຖົມສຶກສາໂດຍການສະໜັບສະໜູນຈາກແຜນງານບີຄວາ. ຮູບພາບສິ່ງທ້າທາຍ ຂອງບົດບາດຍິງຊາຍໄດ້ຖືກເພີ່ມເຂົ້າໃນການເປັນຕົວແທນຂອງແມ່ຍິງ ແລະ ບົດບາດຂອງແມ່ຍິງ ໃນສື່ການຮຽນ ການສອນ. *"ພວກເຮົາໄດ້ເພີ່ມຕົວລະຄອນທີ່ເປັນເພດຍິງໃນປຶ້ມແບບຮຽນ; ເຊັ່ນວ່າ ຮູບ ແລະ ເລື່ອງລາວຂອງເດັກຍິງໄປໂຮງຮຽນ ຫຼື ເປັນຄູ. ຈຸດປະສົງແມ່ນເພື່ອປ່ຽນຄວາມຮັບຮູ້ ກ່ຽວກັບ ແມ່ຍິງ ແລະ ການສຶກສາ. ພວກເຮົາຢາກຝາກຂໍ້ຄວາມວ່າ ການສຶກສາສຳລັບເພດຍິງ ແມ່ນມີຄວາມສຳຄັນ, ແລະ ເພດຍິງກໍ່ສາມາດມີບົດບາດເທົ່າທຽມກັບເພດຊາຍໃນສັງຄົມໄດ້ເຊັ່ນດຽວກັນ"*.



# ມາຮູ້ຈັກກັບ ນາງ ແກ່ນຄຳ ຢາງ, ຜູ້ທີ່ມີແຮງຈູງໃຈສູງໃນການສະໜັບສະໜູນການສຶກສາໃນຊຸມຊົນ



***"ນາງ ແກ່ນຄຳ ໃຫ້ການສະໜັບສະໜູນທີ່ເປັນປະໂຫຍດຫຼາຍຕໍ່ຊຸມຊົນ ໃນການເຜີຍແຜ່ສຸຂະອະນາໄມ, ການກະກຽມຄວາມພ້ອມຂອງການເຂົ້າຮຽນ, ແລະ ກິດຈະກຳສົ່ງເສີມການອ່ານ. ລາວເປັນຜູ້ທີ່ສາມາດອ່ານ ແລະ ຂຽນພາສາລາວໄດ້, ແລະ ຮັບຜິດຊອບກິດຈະກຳຕ່າງໆທາງດ້ານການສຶກສາ".***

**ທ່ານ ຊືມືວລີ, ນາຍບ້ານ ບ້ານກົ່ວຜາ.**

*"ຢູ່ບ້ານຂອງຂ້ອຍມີຫຼາຍຄົນເວົ້າໄດ້ແຕ່ພາສາຊົນເຜົ່າຂອງເຂົາເຈົ້າ ແລະ ບໍ່ສາມາດເຂົ້າໃຈພາສາລາວ. ສິ່ງດັ່ງກ່າວນີ້ສາມາດກາຍເປັນບັນຫາທີ່ທ້າທາຍຫຼາຍ ເມື່ອພວກເຂົາຕ້ອງສື່ສານກັບຄົນອື່ນນອກຊຸມຊົນ. ເມື່ອເຈັບເປັນ, ພວກເຂົາຕ້ອງໄດ້ຊອກຄົນທີ່ເວົ້າພາສາລາວໄດ້ ເພື່ອໃຫ້ພາໄປໂຮງໝໍ ແລະ ຊ່ວຍແປພາສາລາວ. ນີ້ເປັນໜຶ່ງໃນຫຼາຍໆຕົວຢ່າງວ່າເປັນຫຍັງພວກເຮົາຄວນສະໜັບສະໜູນ ແລະ ສົ່ງເສີມໃຫ້ລູກຫຼານຂອງພວກເຮົາຮຽນພາສາລາວ ແລະ ຮຽນເພິ່ງພາຕົນເອງ".*

ນີ້ແມ່ນຄຳເວົ້າຂອງ ນາງ ແກ່ນຄຳ ຢາງ, ອາຍຸ 29 ປີ ຈາກບ້ານກົ່ວຜາ, ເມືອງຮຸນ, ແຂວງອຸດົມໄຊ ຜູ້ມີຄວາມຕັ້ງໃຈຢ່າງສູງໃນການ ສະໜັບສະໜູນໃຫ້ເດັກນ້ອຍທຸກຄົນໃນຊຸມຊົນຂອງລາວໄດ້ຮັບການສຶກສາ. ເພື່ອບັນລຸເປົ້າໝາຍນີ້, ລາວໄດ້ອາສາສະໝັກເປັນຜູ້ຊ່ວຍດຳເນີນກິດຈະກຳກັບກຸ່ມອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຂອງແຜນງານປິຄວາ (BNC). ໃນບົດບາດດັ່ງກ່າວ, ລາວປະຕິບັດກິດຈະກຳການອ່ານຮ່ວມກັບນັກຮຽນປະຖົມຫຼັງຈາກເລີກໂຮງຮຽນ, ປະສານງານຈັດກອງປະຊຸມສຳມະນາເຜີຍແຜ່ວຽກງານການສຶກສາກັບຜູ້ປົກຄອງເດັກ, ແລະ ຊ່ວຍ ຄພສບ ຊອກຫາເດັກດ້ອຍໂອກາດຈາກຊຸມຊົນ ທີ່ມີສິດໄດ້ຮັບທຶນຊ່ວຍເຫຼືອຂະໜາດນ້ອຍຂອງ BNC.

ນອກນັ້ນ, ນາງ ແກ່ນຄຳ ຢາງ ຍັງມີຄວາມພາກພູມໃຈທີ່ໄດ້ເປັນສະມາຊິກ ຄພສບ ແລະ ຕາງໜ້າສະຫະພັນແມ່ຍິງ. ລາວມັກຈະສອນແມ່ຍິງຢູ່ໃນບ້ານ ກ່ຽວກັບຄວາມສຳຄັນຂອງວຽກງານການສຶກສາ ແລະ ການຮຽນຮູ້ພາສາລາວ. ລາວໄດ້ສ້າງແຮງຈູງໃຈໃຫ້ຜູ້ປົກຄອງເອົາລູກຫຼານໄປເຂົ້າໂຮງຮຽນ, ໂດຍອະທິບາຍວ່າ ການຮຽນຈະຊ່ວຍໃຫ້ລູກຫຼານຂອງພວກເຂົາພັດທະນາທັກສະຊີວິດທີ່ສຳຄັນສຳລັບອະນາຄົດຂອງເຂົາເຈົ້າ. ນອກຈາກນີ້, ລາວຍັງໄດ້ຊ່ວຍກິດຈະກຳເຜີຍແຜ່ສຸຂະອະນາໄມເດັກ. ລາວຕິດໂປສເຕີ້ກ່ຽວກັບວິທີການລ້າງມື 7 ຂັ້ນຕອນ ຢູ່ມຸມການອ່ານຂອງໂຮງຮຽນ ແລະ ວາງສະແດງປຶ້ມກ່ຽວກັບສຸຂະອະນາໄມຢູ່ເຮືອນຂອງລາວ ແລະ ຢູ່ໂຮງຮຽນອີກດ້ວຍ.

ດ້ວຍການສະໜັບສະໜູນຈາກຜົວແລະແມ່ຂອງຜົວ, ລາວໄດ້ຮຽນຈົບຊັ້ນສູງດ້ານອາຫານ ແລະ ການບໍລິການໂຮງແຮມ, ແລະ ພາສາອັງກິດ. ລາວເປັນສະມາຊິກ ຄພສບ ເພດຍິງພຽງຄົນດຽວ ທີ່ມີການສຶກສາລະດັບສູງ, ແລະ ສິ່ງດັ່ງກ່າວ ເປັນແຮງຈູງໃຈໃຫ້ລາວໃນການນຳໃຊ້ທັກສະຕ່າງໆ ເຂົ້າໃນການຊ່ວຍເຫຼືອເດັກນ້ອຍ ແລະ ແມ່ຍິງໃນບ້ານ. ລາວຊຸກຍູ້ຜູ້ປົກຄອງຢູ່ໃນຊຸມຊົນຂອງລາວໃຫ້ໃຊ້ເວລາໃນການອ່ານ ຫຼື ເລົ່າເລື່ອງ ກັບລູກຫຼານໃນຍາມແລງ.

*"ຜົວຂອງຂ້ອຍສົ່ງເສີມຂ້ອຍເລື້ອຍໆວ່າໃຫ້ໃຊ້ຄວາມຮູ້ຂອງຕົນທີ່ມີ ເພື່ອຊ່ວຍເຫຼືອເດັກ ແລະ ຜູ້ປົກຄອງໃນບ້ານ ຜູ້ທີ່ບໍ່ຮູ້ພາສາລາວ ໃຫ້ເຂົ້າໃຈວ່າການສຶກສາ ມີຄວາມສຳຄັນຫຼາຍພຽງໃດໃນຊີວິດຕົວຈິງ".*

ທ່ານ ຊີມົວລີ, ນາຍບ້ານ ບ້ານກິ່ວຜາ ກ່າວວ່າ: "*ນາງ ແກ່ນຄຳ ໃຫ້ການສະໜັບສະໜູນທີ່ເປັນປະໂຫຍດຫຼາຍຕໍ່ຊຸມຊົນ ໃນການເຜີຍແຜ່ສຸຂະອະນາໄມ, ການກະກຽມຄວາມພ້ອມຂອງການເຂົ້າຮຽນ, ແລະ ກິດຈະກຳສົ່ງເສີມການອ່ານ. ລາວເປັນຜູ້ທີ່ສາມາດອ່ານ ແລະ ຂຽນພາສາລາວໄດ້, ແລະ ຮັບຜິດຊອບກິດຈະກຳຕ່າງໆທາງດ້ານການສຶກສາ. ເຖິງແມ່ນວ່າລາວຈະມີໜ້າທີ່ຮັບຜິດຊອບໃນຄອບຄົວ, ແຕ່ລາວກໍ່ບໍ່ເຄີຍປະຕິເສດ ເມື່ອຂ້ອຍຂໍຄວາມຊ່ວຍເຫຼືອຈາກລາວ* ".

ລາວຊ່ວຍເຫຼືອຄູໃນການປະສານງານກັບຜູ້ປົກຄອງຊຸກຍູ້ໃຫ້ພວກເຂົາເອົາລູກຫຼານໄປໂຮງຮຽນ. ລາວຊ່ວຍແປພາສາມົ້ງເປັນພາສາລາວ ແລະ ພາສາລາວເປັນພາສາມົ້ງ ໃຫ້ພະນັກງານ BNC ໃນຕອນປະຊຸມສຳມະນາ, ການຝຶກອົບຮົມ ແລະ ກອງປະຊຸມຕ່າງໆ. ນອກຈາກນີ້, ລາວກໍຍັງແປພາສາອັງກິດ ແລະ ພາສາລາວສຳລັບແຂກທີ່ມາຢ້ຽມຢາມບ້ານກິ່ວຜາ ຫຼື ບ້ານອື່ນໆຕາມຄວາມຈຳເປັນ.

ທ່ານ ລີປໍ, ອຳນວຍການໂຮງຮຽນປະຖົມບ້ານກິ່ວຜາ ກ່າວວ່າ: "*ລາວຊຸກຍູ້ເດັກຢູ່ບ້ານເປັນປະຈຳວ່າ ໃຫ້ມາໂຮງຮຽນ, ໃຫ້ເຂົ້າຮ່ວມກິດຈະກຳການອ່ານ, ຢືມປຶ້ມເມືອເຮືອນ ເພື່ອອ່ານຫຼັງຈາກທີ່ກິນເຂົ້າແລ້ວ. ນອກນັ້ນ, ລາວຍັງຊຸກຍູ້ຜູ້ຍິງໃນບ້ານເພື່ອໃຫ້ເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບການດູແລເບິ່ງແຍງເດັກ, ຜູ້ປົກຄອງບາງຄົນກໍ່ບໍ່ຢາກມາເພາະວ່າພວກເຂົາບໍ່ເຂົ້າໃຈພາສາລາວ ແຕ່ລາວກໍ່ຈະຊ່ວຍຊຸກຍູ້ພວກເຂົາໃຫ້ເຂົ້າຮ່ວມ* ".

ນາງ ແກ່ນຄຳ ຫວັງວ່າ ໂດຍຜ່ານການເຂົ້າຮ່ວມກິດຈະກຳຕ່າງໆໃນຊຸມຊົນ, ຫຼາຍຄອບຄົວກໍ່ຈະເຂົ້າໃຈຄວາມສຳຄັນ ແລະ ຄຸນປະໂຫຍດຂອງການສຶກສາ ແລະ ຈະສົ່ງລູກຫຼານຂອງພວກເຂົາໃຫ້ໄປໂຮງຮຽນຕາມເກນອາຍຸທີ່ເໝາະສົມ.ລາວມີຄວາມຫວັງໃຫ້ເດັກນ້ອຍໝົດທຸກຄົນມີອະນາຄົດທີ່ດີຂຶ້ນກວ່າເກົ່າ.

"*ຂ້ອຍຮູ້ສຶກດີໃຈ ແລະ ພາກພູມໃຈຫຼາຍ ທີ່ຂ້ອຍໄດ້ມີໂອກາດເຂົ້າຮ່ວມໂຄງການນີ້ ແລະ ຊ່ວຍເຫຼືອຊຸມຊົນຂອງຂ້ອຍ. ຂ້ອຍໄດ້ຮຽນຮູ້ຫຼາຍໆຢ່າງຜ່ານກິດຈະກຳຂອງແຜນງານບິດາ. ຂ້ອຍຄິດວ່າຂ້ອຍຈະສາມາດຊ່ວຍເຫຼືອລູກຫຼານໃນຊຸມຊົນໃຫ້ຮຽນພາສາລາວ ແລະ ຊ່ວຍເຂົາສື່ສານກັບໝູ່ໃນຫ້ອງຮຽນທີ່ເວົ້າພາສາລາວໄດ້ດີຂຶ້ນ. ນອກຈາກນີ້, ຂ້ອຍກໍ່ຍັງສອນວິທີການລ້າງມືໃຫ້ແກ່ເດັກນ້ອຍ ເຊິ່ງຈະຊ່ວຍໃຫ້ເຂົາມີສຸຂະພາບແຂງແຮງໃນອະນາຄົດ* ".

ອາສາສະໝັກ 616 ຄົນ (ເພດຍິງ 267 ຄົນ) ໄດ້ຮັບການຝຶກອົບຮົມກ່ຽວກັບການຕັ້ງຄ້າຍການອ່ານ ແລະ ການສົ່ງເສີມການອ່ານ.

ສະມາຊິກ ຄພສບ ແລະ ຊຸມຊົນ 18,645 ຄົນ (ເພດຍິງ 10,404 ຄົນ) ໄດ້ເຂົ້າຮ່ວມກິດຈະກຳ ແລະ ການໂຮມຊຸມນຸມສົ່ງເສີມການອ່ານ.

ເດັກ 5,609 ຄົນ (ເດັກຍິງ 2,842 ຄົນ) ໄດ້ຢືມປຶ້ມຈາກຄັງປຶ້ມ.

ເດັກ 8,915 ຄົນ (ເດັກຍິງ 4,300 ຄົນ) ໄດ້ເຂົ້າຮ່ວມສະໂມສອນ, ກຸ່ມ, ຫຼື ຄ້າຍການອ່ານ.

ເດັກ 14,498 ຄົນ (ເດັກຍິງ 7,040 ຄົນ) ໄດ້ຮັບຜົນປະໂຫຍດໂດຍກົງຈາກກອງທຶນຄະນະພັດທະນາການສຶກສາຂັ້ນບ້ານຂະໜາດນ້ອຍ.





# ການສົ່ງເສີມໃຫ້ເດັກພິການໄດ້ເຂົ້າໂຮງຮຽນ



## ນາງ ປໍຈູ ຮູ້ສຶກຕື່ນເຕັ້ນທີ່ສາມາດໄປໂຮງຮຽນໄດ້ ຄືກັນກັບເດັກນ້ອຍຄົນອື່ນ.

ເດັກທຸກຄົນມີສິດໄດ້ຮັບການສຶກສາ. ເຖິງຢ່າງໃດກໍຕາມ, ໃນປະເທດກຳລັງພັດທະນາ ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ສ່ວນຫຼາຍແມ່ນເດັກພິການ. ຄວາມສາມາດຂອງພວກເຂົາຖືກເບິ່ງຂ້າມຢູ່ສະເໝີ, ປະສິດຕິພາບຂອງພວກເຂົາຖືກປະເມີນຕ່ຳ ແລະ ຄວາມຕ້ອງການຂອງພວກເຂົາບໍ່ໄດ້ນອນຢູ່ໃນວຽກງານບູລິມະສິດ. ເຖິງແມ່ນວ່າເປັນແນວນັ້ນ, ສິ່ງກີດຂວາງຕ່າງໆ ທີ່ພວກເຂົາພົບພໍ້ ສ່ວນຫຼາຍແລ້ວແມ່ນມາຈາກສະພາບແວດລ້ອມທີ່ພວກເຂົາຢູ່ ຫຼາຍກວ່າມາຈາກຄວາມເປັນພິການຂອງພວກເຂົາເອງ.

ກຸ່ມອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂອງແຜນງານບີຄວາ (BNC) ສະໜັບສະໜູນສິດທິເພື່ອການສຶກສາສຳລັບທຸກຄົນ ໂດຍຜ່ານໂຄງການກອງທຶນຂະໜາດນ້ອຍ. ຢູ່ໃນບັນດາບ້ານເປົ້າໝາຍທີ່ໂຄງການນີ້ຈັດຕັ້ງປະຕິບັດ, ແລະ ໂດຍການຮ່ວມມືກັບພະແນກສຶກສາທິການ ແລະ ກິລາແຂວງ (ສກຂ), ຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ), ແລະ ຄະນະພັດທະນາການການສຶກສາຂັ້ນບ້ານ (ຄພສບ), ໄດ້ຮ່ວມກັນລະບຸເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ສາເຫດທີ່ພວກເຂົາບໍ່ໄດ້ເຂົ້າໂຮງຮຽນ. ໃນຂັ້ນຕອນດັ່ງກ່າວນີ້, ພວກເຂົາໄດ້ຄົ້ນພົບເດັກພິການຈຳນວນຫຼາຍ ແລະ ໄດ້ຮ່ວມມືກັບອົງການຕ່າງໆເຊັ່ນ ອົງການ COPE ເພື່ອຊອກຫາວິທີທາງຊ່ວຍເຫຼືອເດັກເຫຼົ່ານີ້ ໃຫ້ໄດ້ເຂົ້າໂຮງຮຽນ.

ນາງ ປໍຈູ ເປັນເດັກຍິງເຜົ່າມົ້ງ ອາຍຸ 11 ປີ ທີ່ອາໄສຢູ່ກັບພໍ່ແມ່ຂອງລາວຢູ່ບ້ານກິ່ວຜາ, ເມືອງຮຸນ, ແຂວງອຸດົມໄຊ. ລາວເປັນເດັກທີ່ມີຄວາມຜິດປົກກະຕິທາງສະໝອງ (ກ້າມຊີ້ນອ່ອນແຮງ ເຮັດໃຫ້ມີການເໜັງຕີງຜິດປົກກະຕິ) ແລະ ລາວບໍ່ເຄີຍໄດ້ເຂົ້າໂຮງຮຽນ ເພາະວ່າ ພໍ່ແມ່ຂອງລາວເປັນຫ່ວງວ່າລາວຈະບໍ່ໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນສຳລັບລາວ. ຍ້ອນໄດ້ຮັບການຊ່ວຍເຫຼືອຈາກ BNC ແລະ ຄພສບ, ປໍຈູ ໄດ້ເຂົ້າບຳບັດຢູ່ຂະແໜງການແພດສູນຟື້ນຟູໜ້າທີ່ການ ແຂວງຫຼວງພະບາງ ເປັນເວລາ 12 ວັນ ຊຶ່ງລາວໄດ້ຮັບການບົ່ງມະຕິພະຍາດ ແລະ ການປິ່ນປົວທີ່ເໝາະສົມ. ປໍຈູ ໄດ້ຮັບການຝຶກຫັດທ່າຕ່າງໆ ເພື່ອເຮັດກາຍະບຳບັດ ເພື່ອພັດທະນາການເຄື່ອນໄຫວຮ່າງກາຍຂອງລາວ.

ພໍ່ຂອງປໍຈູ, ມໍຣິ, ໄດ້ກ່າວວ່າ "*ຕັ້ງແຕ່ລູກສາວຂອງຂ້ອຍບໍ່ສາມາດຍ່າງໄດ້ຄືຄົນອື່ນ, ພວກເຮົາກໍບໍ່ຮູ້ວ່າຈະເຮັດແນວໃດ ແລະ ຈະໄປປິ່ນປົວຢູ່ໃສ. ແຕ່ພາຍຫຼັງທີ່ BNC ເຂົ້າມາຊ່ວຍບ້ານຂອງພວກເຮົາ, ຄູຢູ່ໂຮງຮຽນປະຖົມກິ່ວຜາ ກໍໄດ້ແນະນຳໃຫ້ຂ້ອຍພາລູກສາວ ໄປປິ່ນປົວຢູ່ຂະແໜງການແພດສູນຟື້ນຟູໜ້າທີ່ການ. ຂ້ອຍຮູ້ສຶກພູມໃຈ ແລະ ມີຄວາມສຸກຫຼາຍທີ່ມື້ໜຶ່ງລູກສາວຂອງຂ້ອຍອາດຈະຍ່າງໄດ້ຄືກັນກັບໝູ່*".




## ທ້າວ ນັກ ເຮັດກາຍະບໍາບັດຢ່າງເຄັ່ງຄັດ ແລະ ປະຈຸບັນລາວໄດ້ກັບໄປເຂົ້າຮຽນ ຂັ້ນ ປ. 3 ຄືນແລ້ວ.

ຄພສບຍັງໄດ້ຊຸກຍູ້ໃຫ້ປໍຈູເຂົ້າຮ່ວມຄ້າຍການອ່ານ ຂອງ BNC, ຊຶ່ງເປັນຫ້ອງສະໝຸດຊຸມຊົນສໍາລັບເດັກ ທີ່ມີນັກຮຽນມັດທະຍົມຕົ້ນມາຈັດກິດຈະກໍາການອ່ານສໍາລັບເດັກນ້ອຍ ຫຼື ນ້ອງນັກຮຽນທີ່ມີອາຍຸນ້ອຍກວ່າ. ປໍຈູ ມີຄວາມສຸກທີ່ໄດ້ຢູ່ກັບກຸ່ມເດັກນ້ອຍອາຍຸເທົ່າໆກັນ ແລະ ໄດ້ເລີ່ມຫຼິ້ນນໍາໝູ່.

ທ່ານ ສິມພອນ, ພະນັກງານອົງການແຜລນສາກົນປະຈໍາປະເທດລາວ ຢູ່ເມືອງຮຸນໄດ້ ກ່າວວ່າ "*ປໍຈູ ເປັນຜູ້ໜຶ່ງທີ່ມີຄວາມກະຕືລືລົ້ນ ແລະ ຕື່ນເຕັ້ນທີ່ໄດ້ເຂົ້າຮ່ວມກິດຈະກໍາການອ່ານ ຕອນທີ່ຂ້ອຍເປັນອາສາສະໝັກຢູ່ບ້ານຂອງລາວ. ລາວພະຍາຍາມນັ່ງຂ້າງອ້າຍຂອງລາວ ແລະ ບາງຄັ້ງ ກໍເວົ້າຊໍ້າຄືນຄໍາສັບຕາມຫຼັງອ້າຍຂອງລາວເວລາທີ່ອ່ານປຶ້ມ*".

ທ້າວ ນັກ ເປັນເດັກຊາຍຊົນເຜົ່າຂະມຸ ອາຍຸ 14 ປີ ທີ່ອາໄສຢູ່ບ້ານມົກໄປູ, ເມືອງຮຸນ, ແຂວງອຸດົມໄຊ. ລາວມີອາການຕີນໂງ້ງ ແລະ ມີຄວາມຈໍາສັ້ນ. ລາວເຄີຍຄານໄປໂຮງຮຽນຈົນຮອດ ປ.3 ແລ້ວກໍໂຈະການຮຽນ. ນັກ ໄດ້ຮັບການປິ່ນປົວແບບດຽວກັນກັບປໍຈູ. ຕອນທີ່ລາວຢູ່ສູນຟື້ນຟູ, ລາວໄດ້ກ່າວດ້ວຍຄວາມພາກພູມໃຈກັບພະນັກງານ BNC ວ່າ "*ນ້ອງດີໃຈຫຼາຍທີ່ນ້ອງຍ່າງໄດ້. ເຖິງວ່າຈະຍ່າງໄດ້ແບບບໍ່ສົມບູນເທື່ອ, ແຕ່ດຽວນີ້ ນ້ອງກໍຍ່າງໄດ້ ແລະ ບໍ່ໄດ້ຄານຢູ່ພື້ນພຽງຢ່າງດຽວ. ມື້ໜຶ່ງ, ນ້ອງຈະກັບໄປຮຽນຄືນ*". ແລ້ວຄວາມຝັນຂອງລາວກໍເປັນຈິງ! ປະຈຸບັນນີ້ ນັກ ໄດ້ເຂົ້າຮຽນ ປ.3 ຄືນ ແລ້ວ.

ກຸ່ມອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂອງແຜນງານບີຄວາ ໄດ້ຕິດຕາມການຟື້ນຟູທາງດ້ານຮ່າງກາຍຂອງເດັກທັງສອງຢ່າງໃກ້ຊິດ, ຕິດຕາມເບິ່ງຄວາມຫຍຸ້ງຍາກຕ່າງໆທີ່ພວກເຂົາອາດຈະພົບພໍ້ ຈາກການບໍາບັດຟື້ນຟູ, ແລະ ໄດ້ໃຫ້ການສະໜັບສະໜູນກ່ຽວກັບການເປັນຜູ້ເບິ່ງແຍງ ໃຫ້ແກ່ພໍ່ແມ່ ແລະ ຊຸມຊົນຂອງພວກເຂົາ. ນອກນັ້ນ, BNC ກໍໄດ້ຊຸກຍູ້ພວກເຂົາໃຫ້ເຂົ້າຮ່ວມກິດຈະກໍາການຮຽນກັບເດັກນ້ອຍຜູ້ອື່ນໃນບ້ານ.

ໂດຍຜ່ານແຜນງານບີຄວາ, ລັດຖະບານລາວ, ລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ ກໍາລັງເຮັດວຽກເພື່ອຮັບປະກັນວ່າ ເດັກນ້ອຍມີໂອກາດເຂົ້າຮຽນ ແລະ ສາມາດສໍາເລັດການສຶກສາຂັ້ນພື້ນຖານ ເພີ່ມຂຶ້ນໃນອະນາຄົດ ຍ້ອນວ່າເດັກຍິງ, ເດັກຊາຍ, ແລະ ເດັກພິການ ໝົດທຸກຄົນມີສິດໄດ້ຮັບການສຶກສາທີ່ມີຄຸນນະພາບ ເພື່ອໃຫ້ພວກເຂົາມີໂອກາດໃນຊີວິດຫຼາຍຂຶ້ນ.

# ເບື້ອງຫຼັງການຖ່າຍທຳຮູບເງົາກາຕູນດິນປັ້ນ

ບໍລິສັດ ເຄລເຮົາສ໌ ສະຕູດິໂອ ແມ່ນໜຶ່ງໃນ ຜູ້ທີ່ໄດ້ຮັບທຶນຈາກກອງທຶນເພື່ອການຄົ້ນຄວ້າສິ່ງໃໝ່ດ້ານການສຶກສາຂອງແຜນງານບີຄວາ. ບໍລິສັດດັ່ງກ່າວ ເປັນບໍລິສັດຂອງຄົນລາວທີ່ຖ່າຍທຳຮູບເງົາ ແລະ ກາຕູນ. ໂຄງການຂອງພວກເຂົາແມ່ນການປະສົມປະສານ ລະຫວ່າງຮູບເງົາກາຕູນສົ່ງເສີມການສຶກສາ ແລະ ອຸປະກອນການຮຽນເພື່ອສ້າງແຮງຈູງໃຈໃຫ້ເດັກນ້ອຍໄປໂຮງຮຽນ ແລະ ມີສ່ວນຮ່ວມໃນໂຮງຮຽນຫຼາຍຂຶ້ນ. ໂຄງການດັ່ງກ່າວນີ້ ຈະຖືກນຳໃຊ້ຄວບຄູ່ກັບປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູ ຢູ່ໂຮງຮຽນທົດລອງ 6 ແຫ່ງໃນແຂວງອັດຕະປື ແລະ ແຂວງສາລະວັນ, ແລະ ຮູບເງົາກາຕູນດິນປັ້ນທີ່ມີຊື່ວ່າ "ຮຽນຮູ້ຮ່ວມກັນ" ໄດ້ອອກອາກາດໃນສະຖານີໂທລະພາບແຫ່ງຊາດ ຕັ້ງແຕ່ວັນທີ 10 ມິຖຸນາ ເປັນຕົ້ນມາ. ເດັກທຸກຄົນ ລວມທັງຜູ້ປົກຄອງຂອງພວກເຂົາ ຈະໄດ້ຄົ້ນພົບການຜະຈົນໄພຂອງ ອ້າຍແດງ, ໝາສີແດງທີ່ມີຄວາມສະຫຼາດ ພ້ອມດ້ວຍໝູ່ຂອງລາວອີກ 2 ຄົນ ຊື່ວ່າ ນາງ ປູນາ ເດັກຍິງຊົນເຜົ່າທີ່ສະຫຼາດ ແລະ ທ້າວ ສັນຕິ ເດັກຊາຍທີ່ອາໄສຢູ່ເຮືອນຕົ້ນໄມ້ກັບພໍ່ຕູ້ຂອງລາວ. ໃນແຕ່ລະຕອນຂອງລາຍການຮຽນຮູ້ຮ່ວມກັນ, ເດັກນ້ອຍຈະໄດ້ພົບກັບເລື່ອງຕ່າງໆ ກ່ຽວກັບ ຄວາມສຳຄັນຂອງການໄປໂຮງຮຽນ, ການມີໝູ່ເພື່ອນ ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ພວກເຂົາຈະໄດ້ຮຽນຮູ້ກ່ຽວກັບການປົກປ້ອງສິ່ງແວດລ້ອມ, ຄວາມປອດໄພເທິງທ້ອງຖະໜົນ, ສຸຂະສຶກສາ, ໂພຊະນາການ, ນ້ຳສະອາດ ແລະ ບໍ່ສະອາດ, ການບອກເວລາ, ແລະ ຫົວຂໍ້ທີ່ໜ້າສົນໃຈອື່ນໆອີກ.

ທ່ານ ສຸລິຍາ ພູມີວົງ, ຄູສອນຢູ່ພາກວິຊາການອອກແບບການສື່ສານ ຢູ່ສະຖາບັນວິຈິດສິນແຫ່ງຊາດ, ຜູ້ກໍ່ຕັ້ງ ບໍລິສັດ ເຄລເຮົາສ໌ ສະຕູດິໂອ, ທັງເປັນນັກສິນລະປິນຜູ້ຢູ່ເບື້ອງຫຼັງລາຍການ ຮຽນຮູ້ຮ່ວມກັນ ໄດ້ກ່າວວ່າ "*ກາຕູນດິນປັ້ນແມ່ນຮູບແບບໜຶ່ງຂອງສິລະປະ ແລະ ມີມິນສະເໜ່. ແຕ່ການຜະລິດຮູບເງົາກາຕູນດິນປັ້ນແມ່ນບໍ່ງ່າຍ ແລະ ຕ້ອງມີຄວາມອົດທົນ ແລະ ໃສ່ໃຈ. ກ່ອນອື່ນໝົດ ເຮົາຕ້ອງຂຽນໂຄງເລື່ອງກ່ອນ. ຂ້າພະເຈົ້າໄດ້ຮ່ວມມືກັບສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ກົມສື່ມວນຊົນ. ພວກເຮົານຳໃຊ້ຫຼັກສູດຊັ້ນປະຖົມແຫ່ງຊາດ ແລະ ໄດ້ຄັດເລືອກເອົາຫົວຂໍ້ທີ່ເໝາະສົມ ແລະ ສຳຄັນທີ່ສຸດສຳລັບນັກຮຽນທີ່ໜຸ່ມນ້ອຍ. ຂັ້ນຕອນທີ່ຍາກທີ່ສຸດ ແລະ ໃຊ້ເວລາດົນທີ່ສຸດແມ່ນ ການສ້າງໂຄງເລື່ອງທີ່ດີທີ່ຈະສາມາດດຶງດູດຄວາມສົນໃຈຈາກເດັກນ້ອຍ.*



**ທ່ານ ສຸລິຍາ ກຳລັງລົງລາຍລະອຽດສຸດທ້າຍ ໃຫ້ແກ່ຕົວລະຄອນແມວ ແລະ ໝາ.**

*ການສ້າງຊີວິດຊີວາໃຫ້ຫຼັກສູດ ໃຊ້ເວລາເກືອບ 2 ປີ ແລະ ການປັບບົດລະຄອນຫຼາຍຄັ້ງເພື່ອໃຫ້ທຸກພາກສ່ວນເຫັນດີ.*".

"ສ່ວນທີ່ໜ້າສົນໃຈທີ່ສຸດຂອງໂຄງການແມ່ນການສ້າງຕົວລະຄອນ ແລະ ບັນຍາກາດ. ທີມຂອງພວກເຮົາ ໄດ້ໄປຢ້ຽມຢາມເດັກນ້ອຍ ແລະ ຄູອາຈານ, ຮັບຟັງຄຳຄິດເຫັນ ແລະ ຄວາມຮູ້ສຶກຂອງພວກເຂົາ.ພວກເຮົາໄດ້ເອົາຮ່າງໂຄງພາບເບື້ອງຕົ້ນ, ແລະ ການຕັດຕໍ່ ເປັນຮູບເງົາກາຕູນສະບັບທຳອິດໃຫ້ພວກເຂົາເບິ່ງ. ພວກເຮົາຢາກປັບຕົວລະຄອນໃຫ້ເຂົ້າກັບຄວາມມັກຂອງຜູ້ຊົມ, ຕົວລະຄອນທີ່ຜູ້ຊົມເບິ່ງແລ້ວ ຮູ້ສຶກມັກທັນທີ ແລະ ຢາກຟັງເລື່ອງຈາກຕົວລະຄອນນັ້ນ. ໃນຂະນະທີ່ຢູ່ພາກເໜືອຂອງປະເທດລາວ ສັດທີ່ຜູ້ຊົມມັກຫຼາຍແມ່ນໂຕຊ້າງ ແລະ ໂຕຄວາຍ, ເດັກນ້ອຍຢູ່ພາກໃຕ້ພັດມັກໃຫ້ໂຕໝາ ຫຼື ໂຕແມວເປັນຕົວສະແດງຫຼັກ. ນີ້ຈຶ່ງເປັນທີ່ມາຂອງອ້າຍແດງ. ຂ້າພະເຈົ້າໄດ້ສ້າງຊຸດໂຄງພາບໃນເວລາທີ່ເດີນທາງໄປພາກໃຕ້. ດັ່ງນັ້ນ, ເຄື່ອງແຕ່ງກາຍ, ສາກຫຼັງ, ເຮືອນ, ພືດຜັກ, ຕົ້ນໄມ້ ແລະ ອື່ນໆ ໃນລາຍການແມ່ນສິ່ງທີ່ສາມາດພົບເຫັນໄດ້ໃນຕົວຈິງຂອງພາກໃຕ້ຂອງປະເທດລາວ."

ຢູ່ຫ້ອງສະແດງກາຕູນດິນປັ້ນ ມີຄົນເຮັດວຽກຮ່ວມກັບ ທ່ານ ສຸລິຍາ ຈຳນວນ 6 ຄົນ. ພວກເຂົາເຮັດວຽກຮ່ວມກັນໃນການສ້າງສາກຖ່າຍທຳ 8 ສາກ, ຕົວລະຄອນດິນປັ້ນ ແລະ ສິ່ງຂອງຕ່າງໆຫຼາຍຮ້ອຍອັນ ເພື່ອການຖ່າຍທຳລາຍການ ຮຽນຮູ້ຮ່ວມກັນ. ທ່ານ ສຸລິຍາ ອະທິບາຍວ່າ "*ພາກການຂຶ້ນແບບແມ່ນອັດສະຈັນ, ພວກເຮົາຫຼໍ່ດິນປັ້ນຕາມແບບທີ່ກຳນົດ, ໃສ່ສີ, ແລະ ສ້າງເລື່ອງໃຫ້ຕົວລະຄອນດ້ວຍມື, ຂ້າພະເຈົ້າອອກແບບຕົວລະຄອນຫຼັກດ້ວຍຕົນເອງ. ຂ້າພະເຈົ້າສ້າງສ່ວນປະສົມດິນປັ້ນເອງຈາກເຂົ້າດ້ວຍສູດລັບຂອງຂ້າພະເຈົ້າ, ຂ້າພະເຈົ້າ ຢາກໃຫ້ດິນປັ້ນແຂງແຮງພໍໃນການວາງໃສ່ສາກ, ມີຄວາມທົນນານ, ແຕ່ກໍມີຄວາມຍືດຍຸ່ນເພື່ອນການສະແດງ ແລະ ການເຄື່ອນໄຫວ.*"

ໃນການຖ່າຍທຳຕົວຈິງ ຕ້ອງໄດ້ໃຊ້ຄວາມຕັ້ງໃຈ ແລະ ຄວາມແມ່ນຢຳ ເພື່ອສ້າງຮູບເງົາກາຕູນໃຫ້ເໝືອນຈິງ. ທ່ານ ສຸລິຍາ ນຳພາ ແລະ ຄວບຄຸມການຜະລິດແຕ່ລະຕອນຢ່າງລະມັດລະວັງ. "ອີງຕາມໂຄງບົດລະຄອນ, ພວກເຮົາວາງຕົວລະຄອນແລ້ວຖ່າຍຮູບຈຳນວນຫຼາຍ ໂດຍການນຳໃຊ້ເຕັກນິກການຢຸດການເຄື່ອນໄຫວ. ຫຼັງຈາກນັ້ນ ພວກເຮົາລວມບັນດາຮູບທີ່ຖືກຖ່າຍເຂົ້າດ້ວຍກັນ ເພື່ອ

ສ້າງເປັນວິດີໂອທີ່ມີ ຮູບ 15 ຮູບ ຕໍ່ 1 ວິນາທີ. ບາງສາກກໍ່ຍາກຫຼາຍ ເພາະວ່າມີຫຼາຍຕົວລະຄອນ. ພວກເຮົາຕ້ອງໄດ້ລະວັງ ເພື່ອຮັບປະກັນວ່າການສະແດງຂອງແຕ່ລະຕົວລະຄອນ ແມ່ນມີຄວາມຕໍ່ເນື່ອງກັບສາກທີ່ຖ່າຍທຳກ່ອນໜ້ານັ້ນ ເພາະອາດຈະມີຄວາມສ່ຽງທີ່ເຮົາເອີ້ນວ່າ ການສະແດງໂດດ, ໝາຍຄວາມວ່າຕົວລະຄອນໂດດໄປຕຳແໜ່ງທີ່ແຕກຕ່າງກັນ. ຖ້າວ່າມີຫຍັງຜິດພາດ, ພວກເຮົາຕ້ອງໄດ້ຖ່າຍທຳໃໝ່ທັງໝົດ.”

ສ່ວນສຸດທ້າຍແມ່ນສ່ວນທີ່ງ່າຍທີ່ສຸດ ນັ້ນກໍຄືການອັດສຽງນັກສະແດງທີ່ອອກສຽງໃຫ້ແກ່ຕົວລະຄອນ ແລະ ຖ່າຍທຳການສະແດງຕົວຈິງ. ແຕ່ລະຕອນມີຄວາມຍາວປະມານ 15 ນາທີ ແລະ ມີການປະສົມປະສານລະຫວ່າງ ‘ກາຕູນດິນປັ້ນ’, ສາກການສະແດງຕົວຈິງ, ແລະ ການເລົ່າເລື່ອງດ້ວຍກາຕູນ.

ທ່ານ ສຸລິຍາ ກ່າວວ່າ “*ຂ້າພະເຈົ້າເປັນນັກສິນລະປິນ ແລະ ຍັງເປັນຄູອີກດ້ວຍ. ຂ້າພະເຈົ້າຢາກນຳໃຊ້ສິລະປະ ເພື່ອເຮັດໃຫ້ການສຶກສາມີຄວາມເຂັ້ມແຂງຂຶ້ນ, ຊ່ວຍເດັກນ້ອຍໃນປະເທດລາວໃຫ້ມີຄວາມຮູ້ຫຼາຍຂຶ້ນ. ຂ້າພະເຈົ້າຢາກຂໍຂອບໃຈຄູ່ຮ່ວມງານຈາກທຸກພາກສ່ວນທັງພາກລັດ ແລະ ທີມງານແຜນງານບິດວາໃນການສະໜັບສະໜູນລາຍການ ຮຽນຮູ້ຮ່ວມກັນ ທີ່ມີມາແຕ່ຕົ້ນກໍຄືຄວາມເຊື່ອໝັ້ນທີ່ເພິ່ນໄດ້ມອບໃຫ້ພວກເຮົາ*”.

## ອອກອາກາດທາງໂທລະພາບ ທຸກວັນອາທິດ:

**09:00-09:15 ຊ່ອງ ປກສ**

**16:35-16:50 ຊ່ອງ ສທລ 3**

**17:00-17:15 ຊ່ອງ ລາວສະຕາ**

ເບິ່ງຕົວຢ່າງກາຕູນ ໂດຍການສະແກນໂທລະສັບຂອງທ່ານ ທີ່ຮູບ QR ລຸ່ມນີ້.



**ແລະ... ເລີ່ມການສະແດງ! ສັນຕິ ແລະ ປູນາ, ຕົວລະຄອນທີ່ເປັນເພື່ອນກັນ ໃນລາຍການ ຮຽນຮູ້ຮ່ວມກັນ.**



**ທົດລອງສາຍຮູບເງົາກາຕູນດິນປັ້ນຮອບທຳອິດ ຮ່ວມກັບເດັກນ້ອຍໃນໂຮງຮຽນປະຖົມ.**



ກະຊວງສຶກສາທິການ ແລະ ກິລາ
ເລກທີ 1, ຖະໜົນລ້ານຊ້າງ
ນະຄອນຫຼວງວຽງຈັນ
ສປປ ລາວ

+856 30 5412422
info@bequal-laos.org

www. bequal-laos.org